ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission Office

# ບົດລາຍງານປະຈຳປີ 2023
# ANNUAL REPORT 2023



# ບົດຄຳເຫັນຂອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ



ຕະຫຼາດທຶນ ເປັນອີກໜຶ່ງແຫຼ່ງທຶນ ແລະ ສູນກາງການລະດົມທຶນ ທີ່ມີຄວາມສຳຄັນຕໍ່ລະບົບເສດຖະກິດ ແລະ ສັງຄົມ ຂອງ ສປປ ລາວ ຊຶ່ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມອົງການຄຸ້ມຄອງວຽກງານຫຼັກຊັບ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນໃນການສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງຕິດຕາມກວດກາວຽກງານຫຼັກຊັບ ເພື່ອເຮັດໃຫ້ຕະຫຼາດທຶນຂອງ ສປປ ລາວ ເຕີບໃຫຍ່ຂະຫຍາຍຕົວຢ່າງເຂັ້ມແຂງ ມີປະສິດທິພາບ, ໜ້າເຊື່ອຖື ແລະ ສອດຄ່ອງກັບມາດຕະຖານສາກົນ ເທື່ອລະກ້າວ.

ໃນປີ 2023 ເສດຖະກິດໂລກຍັງ ຢູ່ໃນສະພາວະຄວາມບໍ່ແນ່ນອນ ເນື່ອງຈາກສະພາບການເສດຖະກິດ, ການເມືອງ ແລະ ຄວາມຂັດແຍ່ງລະຫວ່າງປະເທດທີ່ຍັງບໍ່ທັນສິ້ນສຸດ. ພ້ອມນີ້, ທິດທາງນະໂຍບາຍຂອງທະນາຄານກາງ ສ. ອາເມລິກາ ໃນແຕ່ລະໄລຍະກໍ່ມີບົດບາດ ແລະ ມີອິດທິພົນທີ່ສຳຄັນຕໍ່ກັບຕະຫຼາດທຶນສາກົນ ລວມທັງ ການປ່ຽນແປງດິນຟ້າອາກາດຂອງບັນດາປະເທດ ກໍ່ເປັນອີກໜຶ່ງບັນຫາທີ່ຕ້ອງໄດ້ໃຫ້ຄວາມສຳຄັນ ແລະ ຍົກສູງການແກ້ໄຂ ຊຶ່ງໜຶ່ງເຄື່ອງມືໃນການແກ້ໄຂໃນຂົງເຂດຕະຫຼາດທຶນ ກໍ່ຄື ສົ່ງເສີມການລົງທຶນທີ່ເປັນມິດຕໍ່ກັບສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງບັນດາປະເທດໃນຂອບເຂດອາຊຽນ ກໍ່ໄດ້ສຸມໃສ່ຄົ້ນຄວ້າວຽກງານ ພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ ແລະ ວຽກງານຂອງຕະຫຼາດສິນເຊື່ອກາກບອນ ທີ່ຄາດວ່າຈະເປັນທ່າແຮງສຳຄັນໃນການຫຼຸດຜ່ອນຜົນກະທົບ ແລະ ຮັກສາສິ່ງແວດລ້ອມໃຫ້ດີຍິ່ງຂຶ້ນ.

ສຳລັບ ສປປ ລາວ ໃນປີ 2023 ໄດ້ສືບຕໍ່ສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຊຸ້ນຂ້ຽວຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ (2021-2023), ເວົ້າສະເພາະ ຢູ່ໃນຂະແໜງຕະຫຼາດທຶນຂອງພວກເຮົາ ກໍ່ພວມສຸມໃສ່ຜັນຂະຫຍາຍຈັດຕັ້ງປະຕິບັດບັນດາແຜນງານ-ໂຄງການ ພັດທະນາຕະຫຼາດທຶນ 5 ປີ (2021-2025).

ການພັດທະນາຕະຫຼາດທຶນ ໃນປີ 2023 ບົນພື້ນຖານການຊີ້ນຳ-ນຳພາຢ່າງໃກ້ສິດຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍສົມທົບກັບບັນດາຜູ້ມີສ່ວນຮ່ວມໃນວຽກງານຕະຫຼາດທຶນ ໄດ້ສຸມໃສ່ຈັດຕັ້ງປະຕິບັດວຽກງານຕາມແຜນພັດທະນາຕະຫຼາດທຶນ ໂດຍລັດຖະບານໄດ້ຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035; ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຈຳນວນ 07 ສະບັບ, ສຳລັບການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ເຫັນວ່າ ມີປະສິດທິພາບ ແລະ ສາມາດສະກັດກັ້ນການກະທຳຜິດ ໂດຍໄດ້ປະຕິບັດມາດຕະການປັບໄໝ ຕໍ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ບໍລິສັດເຄື່ອນໄຫວນອກວັດຖຸປະສົງ ລວມຈຳນວນ 3 ກໍລະນີ; ດ້ານການຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ ໃນປີ 2023 ມີຍອດສະສົມການລະດົມທຶນ ທັງພາຍໃນ ແລະ ຕ່າງປະເທດ 43,218.35 ຕື້ກີບ (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດ), ໃນນີ້ ໄດ້ສຳເລັດການຄົ້ນຄວ້າອະນຸມັດໃຫ້ບໍລິສັດລະດົມທຶນຜ່ານຕະຫຼາດທຶນ ຈຳນວນ 5 ກໍລະນີ, ຊຸກຍູ້ບໍລິສັດຈົດທະບຽນ ເຂົ້າຮ່ວມຝຶກອົບຮົມທີ່ກ່ຽວຂ້ອງກັບ ມາດຕະຖານສາກົນດ້ານການລາຍງານການເງິນ (IFRS), ສຳເລັດການຄົ້ນຄວ້າຄວາມ

ຕ້ອງການທາງດ້ານທຸລະກິດ (Business requirement) ໃນການສ້າງ Platform ສຳລັບ CG Scorecard ໃນຮູບແບບອອນລາຍ ທີ່ເປັນມາດຕະຖານ ພ້ອມທັງ ສຳເລັດການຕິດຕາມຜົນການປະເມີນການຈັດຕັ້ງປະຕິບັດຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນ 8 ແຫ່ງ. ດ້ານການພັດທະນາຜະລິດຕະພັນຫຼັກຊັບ ໄດ້ສຳເລັດການຄົ້ນຄວ້າຮ່າງບົດວິພາກເສດຖະກິດ ແລະ ສຳເລັດການສ້າງແຜນການພັດທະນາກະດານຮອງ ສຳລັບຊື້ຂາຍຮຸ້ນຂອງວິສາຫະກິດ ຂະໜາດນ້ອຍ ແລະ ກາງ. ດ້ານການຄົ້ນຄວ້າພັນທະບັດສີຂຽວ, ສັງຄົມ ແລະ ຍືນຍົງ ໄດ້ສຳເລັດການຈັດກອງປະຊຸມສຳມະນາຮ່ວມກັບ ກລຕ ໄທ 1 ຄັ້ງ ແລະ ຈັດກອງປະຊຸມຖອດຖອນບົດຮຽນໃຫ້ບໍລິສັດເປົ້າໝາຍ 1 ແຫ່ງ. ພ້ອມນີ້, ໄດ້ສຳເລັດການຄົ້ນຄວ້າຮູບແບບການຄຸ້ມຄອງກອງທຶນ ເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund), ການສ້າງຕັ້ງກອງທຶນທຸລະກິດຮ່ວມລົງທຶນ (Venture Capital: VC) ຢູ່ ສປປ ລາວ ແລະ ການສ້າງຕັ້ງກອງທຶນພື້ນຖານໂຄງລ່າງ (Infrastructure Fund). ສຳລັບການຄຸ້ມຄອງສະຖາບັນສີກາງດ້ານຫຼັກຊັບ ໄດ້ສຳເລັດການຮັບຮອງ ແລະ ຕໍ່ອາຍຸສະຖາບັນສີກາງດ້ານຫຼັກຊັບອື່ນ ຈຳນວນ 10 ແຫ່ງ, ສຳເລັດການອອກ-ຕໍ່ອາຍຸໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 11 ທ່ານ, ຜູ້ກວດສອບບັນຊີ 11 ທ່ານ ແລະ ຜູ້ປະເມີນມູນຄ່າຊັບສິນ 01 ທ່ານ ພ້ອມທັງ ໄດ້ສຳເລັດການຄົ້ນຄວ້າກຳນົດຜູ້ຄຸ້ມຄອງຫຼັກບໍລິສັດປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ, ສົມທົບກັບ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ເພື່ອຊຸກຍູ້ການສ້າງຕັ້ງສະມາຄົມຕະຫຼາດທຶນລາວ, ກະກຽມພັດທະນາລະບົບການຊື້ຂາຍຫຼັກຊັບ ຜ່ານມືຖື (Mobile Trading System) ແລະ ໄດ້ສຳເລັດການຄົ້ນຄວ້າວຽກງານຄ້ຳປະກັນສິນເຊື່ອ (Credit Guarantee). ຄຽງຄູ່ກັນນີ້, ສຄຄຊ ໄດ້ສືບຕໍ່ໃຫ້ຄວາມສຳຄັນໃນການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນໃຫ້ແກ່ມວນຊົນ ໂດຍໄດ້ພັດທະນາ ເນື້ອໃນ ແລະ ຮູບແບບ ການຝຶກອົບຮົມ ແລະ ການໂຄສະນາເພື່ອໃຫ້ແທດເໝາະກັບກຸ່ມເປົ້າໝາຍຫຼາຍຍິ່ງຂຶ້ນ ຊຶ່ງໄດ້ສຳເລັດການຈັດຕັ້ງ 8 ຄັ້ງ, ສຳເລັດການສ້າງຫຼັກສູດຝຶກອົບຮົມ ຈຳນວນ 4 ຫຼັກສູດ, ສຳເລັດການສື່ໂຄສະນາຕ່າງໆ 18 ຫົວຂໍ້. ນອກນີ້, ໄດ້ສຳເລັດການສ້າງບົດຄົ້ນຄ້ວາແຜນພັດທະນາຄວາມຕ້ອງການທຸລະກິດ (BA) ແລະ ບົດຄົ້ນຄວ້າແຜນພັດທະນາຄວາມຕ້ອງການດ້ານເຕັກນິກ (TA) ຂອງ ລະບົບຊື້ຂາຍຮຸ້ນຈຳລອງ (Mock Trading System).

ພ້ອມນີ້, ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານວິຊາການ ສຄຄຊ ໄດ້ເພີ່ມທະວີການຮ່ວມມືໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ໄດ້ສຳເລັດການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າແບບສາມຝ່າຍ ສສ.ຫວຽດນາມ, ລຸກຊຳບວກ ແລະ ສປປ ລາວ (Lao/032) ພ້ອມທັງ ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດໂຄງການ 3 ປີ ໃນວຽກງານຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ຂອງ ສຄຄຊ ພ້ອມນີ້ ພາຍໃຕ້ໂຄງການດັ່ງກ່າວ ໄດ້ຈັດກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມ ຈຳນວນ 7 ຄັ້ງ; ເຜີຍແຜ່ບັນດາລະບຽບການໃຫ້ບໍລິສັດຈົດທະບຽນ ຈຳນວນ 3 ຄັ້ງ; ກອງປະຊຸມເສວະນາ (Panel Discussion) ແລະ ກອງປະຊຸມໂຕະມົນ ເພື່ອປຶກສາຫາລືກ່ຽວກັບວຽກງານຫຼັກຊັບ ຈຳນວນ 2 ຄັ້ງ ຊຶ່ງເຮັດໃຫ້ບຸກລະຄາກອນໃນວຽກງານຕະຫຼາດທຶນ ສາມາດຖອດຖອນບົດຮຽນ ເພື່ອນຳມາປັບປຸງນິຕິກຳ ແລະ ສ້າງແນວທາງໃນການຄຸ້ມຄອງວຽກງານຫຼັກຊັບໃຫ້ສອດຄ່ອງກັບມາດຕະຖານສາກົນເທື່ອລະກ້າວ.

ສຳລັບທິດທາງແຜນການໃນປີ 2024 ສຄຄຊ ຈະສຸມໃສ່ສ້າງ ແລະ ປັບປຸງນິຕິກຳລຸ່ມກົດໝາຍໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມໜັກແໜ້ນ ແລະ ເຂັ້ມແຂງ, ສົມທົບກັບກະຊວງກ່ຽວຂ້ອງ ໃນການຄົ້ນຄວ້າລາຍຊື່ເປົ້າໝາຍບໍລິສັດທີ່ເປັນບູລິມະສິດ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ, ຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງ

ຮອບດ້ານ ໃຫ້ແກ່ວິສາຫະກິດ ທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ, ທົບທວນຄືນແຜນການຈັດຕັ້ງປະຕິບັດມາດຕະຖານການລາຍງານທາງການເງິນ (IFRS) ຂອງບໍລິສັດຈົດທະບຽນ, ຊຸກຍູ້ ແລະ ຕິດຕາມ ຕະຫຼາດຫຼັກຊັບ ກ່ຽວກັບການເລີ່ມການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບ. ນອກຈາກນີ້, ຈະໄດ້ປະສານສົມທົບກັບ ຕະຫຼາດຫຼັກຊັບ ໃນການຄົ້ນຄວ້າການເປັນອົງກອນຄຸ້ມຄອງຕົນເອງ (Self-Regulatory Organization : SRO) ໃນຮູບແບບສ້າງນິຕິກຳໃດໜຶ່ງເພື່ອຢັ້ງຢືນການເປັນ SRO ຂອງ ຕະຫຼາດຫຼັກຊັບ ໂດຍສອດຄ່ອງຕາມຫຼັກການລວມຂອງ IOSCO, ທົບທວນຄືນຜົນການຄົ້ນຄວ້າກ່ຽວກັບຄວາມພ້ອມໃນການສ້າງຕັ້ງສູນຮັບຝາກຫຼັກຊັບ, ຄົ້ນຄວ້າເປົ້າໝາຍວິສາຫະກິດເພື່ອຊຸກຍູ້ການອອກຈຳໜ່າຍຮຸ້ນກູ້ສີຂຽວ, ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າປັບປຸງນະໂຍບາຍອາກອນ ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ, ຄົ້ນຄວ້າການຫັນວິສາຫະກິດ ຜ່ານກົນໄກຕະຫຼາດທຶນ, ຄົ້ນຄວ້າການຊຸກຍູ້ທະນາຄານທຸລະກິດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຄົ້ນຄວ້າຄວາມເປັນໄປໄດ້ ໃນການກຳນົດໃຫ້ວິສາຫະກິດ ທີ່ໄດ້ຮັບໂຄງການສຳປະທານຈາກລັດຖະບານ ຕ້ອງເປັນບໍລິສັດມະຫາຊົນ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບ. ນອກຈາກນັ້ນ, ຍັງຈະໄດ້ສືບຕໍ່ຄົ້ນຄວ້າສ້າງຕັ້ງສະມາຄົມຕະຫຼາດທຶນລາວ, ຊຸກຍູ້ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນການຄົ້ນຄວ້າພັດທະນາລະບົບການຊື້ຂາຍຫຼັກຊັບ ຜ່ານມືຖື (Mobile Trading System), ພ້ອມທັງ ຊຸກຍູ້ການກໍ່ສ້າງຊ່ຽວຊານສະເພາະດ້ານ ເພື່ອຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ຂອງສະຖາບັນສື່ກາງດ້ານຫຼັກຊັບ, ສືບຕໍ່ຈັດຕັ້ງວຽກງານໂຄສະນາເຜີຍແຜ່ດ້ວຍຫຼາຍຮູບການທີ່ເໝາະສົມ, ສືບຕໍ່ຮ່ວມມື ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ຢ່າງເປັນປົກກະຕິ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານວິຊາການ ແລະ ກະກຽມເປັນປະທານ ແລະ ເປັນເຈົ້າພາບໃນການຈັດກອງປະຊຸມ ACMF ໃນປີ 2024.

# ສະຖິຕິສຳຄັນໃນປີ 2023



ປີ 2023 ໄດ້ສ້າງ ແລະ ປັບປຸງນິຕິກຳ 7 ສະບັບ ປະກອບມີ: ຂໍ້ຕົກລົງ 4 ສະບັບ, ແຈ້ງການ 1 ສະບັບ ແລະ ຄຳແນະນຳ 2 ສະບັບ (ປະຈຸບັນ ສຄຄຊ ມີນິຕິກຳທັງໝົດ 98 ສະບັບ)



ໃນປີ 2023 ນັກວິຊາຊີບທັງໝົດ **63 ຄົນ** ປະກອບມີ:

- ນັກວິຊາຊີບທຸລະກິດຫຼັກຊັບ 22 ຄົນ (ທີ່ປຶກສາທາງດ້ານການເງິນ 7 ຄົນ, ນາຍໜ້າຊື້ຂາຍຫຼັກຊັບ 8 ຄົນ, ຜູ້ວິເຄາະຫຼັກຊັບ 2 ຄົນ, ຜູ້ຄ້າຫຼັກຊັບ 3 ຄົນ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ 1 ຄົນ ແລະ ທີ່ປຶກສາການລົງທຶນ 1 ຄົນ);
- ນັກວິຊາຊີບກວດສອບ 21 ຄົນ;
- ນັກວິຊາຊີບປະເມີນມູນຄ່າຊັບສິນ 20 ຄົນ.



ບັນຊີຜູ້ລົງທຶນທັງໝົດໃນປີ 2023 **ຫຼຸດລົງ 40 ບັນຊີ** (ທັງໝົດມີ **17,084 ບັນຊີ** ຄື: ພາຍໃນ 13,578 ບັນຊີ ຕ່າງປະເທດ 3,506 ບັນຊີ).



- ມູນຄ່າການຊື້ຂາຍ ໃນປີ 2023 ແມ່ນ **24.85 ຕື້ກີບ** (ທັງໝົດນັບແຕ່ເປີດຕະຫຼາດມີ **1,786.09 ຕື້ກີບ**;
- ມູນຄ່າຕະຫຼາດໃນທ້າຍປີ 2023 ແມ່ນ **13,723.58 ຕື້ກີບ**;
- ດັດຊະນີຫຼັກຊັບທ້າຍປີ 2023 ປິດຢູ່ທີ່ **1,079.42 ຈຸດ**.



- ປີ 2023 ມີບໍລິສັດຈົດທະບຽນ ທັງໝົດມີ **10 ແຫ່ງ**;
- ໄດ້ຮັບຮູ້ການອອກຈຳໜ່າຍຮຸ້ນກູ້ ຢູ່ປະເທດໄທ 2 ຄັ້ງ ມູນຄ່າ **4.258 ຕື້ກີບ**;
- ຍອດສະສົມການລະດົມທຶນຜ່ານການອອກຫຼັກຊັບ (ຮຸ້ນ ແລະ ຮຸ້ນກູ້) ທັງພາຍໃນ ແລະ ຕ່າງປະເທດ ຮອດປັດຈຸບັນ: **30,114.53 ຕື້ກີບ**;
- ການອອກຈຳໜ່າຍພັນທະບັດ ຜ່ານ ຕະຫຼາດຫຼັກຊັບ: **3,708.11 ຕື້ກີບ; 55.48 ລ້ານໂດລາສະຫະລັດ** ແລະ **3,000 ລ້ານບາດ**;
- ຍອດສະສົມການລະດົມທຶນ ຜ່ານການອອກຈຳໜ່າຍພັນທະບັດ ຜ່ານ ຕະຫຼາດຫຼັກຊັບ ຮອດປີ 2023: **9,095.11 ຕື້ກີບ**; **128.78 ລ້ານໂດລາສະຫະລັດ** ແລະ **3,000 ລ້ານບາດ.**



- ບໍລິສັດຫຼັກຊັບ **4 ແຫ່ງ**
- ບໍລິສັດກວດສອບ **4 ແຫ່ງ**
- ບໍລິສັດປະເມີນມູນຄ່າຊັບສິນ **8 ແຫ່ງ**
- ທະນາຄານດູແລຊັບສິນ **4 ແຫ່ງ**
- ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື **1 ແຫ່ງ**
- ແລະ ສະຖາບັນສື່ກາງອື່ນ ອີກ **11 ແຫ່ງ.**



- ປະຕິບັດມາດຕະການປັບໃໝ **1 ກໍລະນີ.**

## ສາລະບານ

I. ສະພາບຕະຫຼາດທຶນ ໃນປີ2023 ____ 1

1. ສະພາບຕະຫຼາດທຶນຂອງຕ່າງປະເທດ ____ 1

2. ສະພາບຕະຫຼາດທຶນຂອງ ສປປ ລາວ ____ 1

II. ການຄຸ້ມຄອງວຽກງານຫຼັກຊັບໃນປີ2023 ____ 2

1. ອົງການຄຸ້ມຄອງວຽກງານຫຼັກຊັບ ____ 2

1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ ____ 2

1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ____ 3

2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2023 ____ 5

2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 5

2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ____ 5

2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ____ 6

2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ____ 6

2.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ ____ 8

2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ____ 10

2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ ____ 12

2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ ____ 12

2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ____ 12

2.8 ການຮ່ວມມືສາກົນ ____ 16

III. ທິດທາງແຜນການ ປີ2024 ____ 20

1. ຄາດຄະເນສະພາບຕະຫຼາດທຶນຂອງ ຕ່າງປະເທດ 20

2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ 20

3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2024 20

3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ 20

3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນ ໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ 21

3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ 21

3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ 21

3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ 22

3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ 22

3.7 ການຮ່ວມມືສາກົນ 22

## I. ສະພາບຕະຫຼາດທຶນ ໃນປີ 2023

### 1. ສະພາບຕະຫຼາດທຶນຂອງຕ່າງປະເທດ

ຕະຫຼາດທຶນຕ່າງປະເທດ ໂດຍລວມແມ່ນມີການປັບຕົວເພີ່ມຂຶ້ນຈາກປີທີ່ຜ່ານມາ ເນື່ອງຈາກສະພາບເສດຖະກິດໂລກ ມີທ່າອ່ຽງທີ່ດີຂຶ້ນ ປະກອບກັບຜົນການດຳເນີນງານຂອງບັນດາບໍລິສັດຈົດທະບຽນ ທີ່ຢູ່ໃນລະດັບດີ ຕາມການຄາດຄະເນ ສິ່ງຜົນເຮັດໃຫ້ອັດຕາເງິນເຟີ້ມີທ່າອ່ຽງຫຼຸດລົງ. ພ້ອມນີ້, ການປັບຫຼຸດອັດຕາດອກເບ້ຍ ແລະ ນະໂຍບາຍການເງິນຕ່າງ ຂອງທະນາຄານກາງ ສ.ອາເມລິກາ (FED) ກໍ່ກາຍເປັນປັດໄຈສຳຄັນໃນການປັບຕົວເພີ່ມຂຶ້ນຂອງຕະຫຼາດທຶນ ລວມທັງ ເສດຖະກິດໃນທົ່ວໂລກ ເປັນຕົ້ນແມ່ນ ເສດຖະກິດຂອງກຸ່ມປະເທດເອີຣົບ ແລະ ອາຊີ ທີ່ປັບຕົວຂຶ້ນໃນແຕ່ລະໄຕມາດ. ນອກນີ້, ທະນາຄານກາງແຕ່ລະປະເທດ ກໍ່ໄດ້ມີການວາງແຜນນະໂຍບາຍທາງດ້ານການເງິນ ແລະ ອັດຕາດອກເບ້ຍ ຊຶ່ງສິ່ງຜົນເຮັດໃຫ້ຜູ້ລົງທຶນມີຄວາມເຊື່ອໝັ້ນ ແລະ ຄາດຫວັງ ຕໍ່ກັບທ່າອ່ຽງຂອງການຟື້ນຕົວຂອງເສດຖະກິດ.

### 2. ສະພາບຕະຫຼາດທຶນຂອງ ສປປ ລາວ

ສະພາບໂດຍລວມຂອງຕະຫຼາດທຶນລາວ ໃນປີນີ້ ແມ່ນມີການປັບຕົວເພີ່ມຂຶ້ນ ເມື່ອທຽບກັບປີຜ່ານມາ ໂດຍສະເພາະ ດັດຊະນີຕະຫຼາດຫຼັກຊັບ ທີ່ປັບຕົວເພີ່ມຂຶ້ນ ເນື່ອງຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ LALCO, ໃນຂະນະທີ່ມູນຄ່າການຊື້ຂາຍ ມີການປັບຕົວຫຼຸດລົງ ຊຶ່ງສາເຫດຫຼັກຂອງສະພາບການຕະຫຼາດທຶນລາວໃນປີນີ້ ແມ່ນມາຈາກ ຜົນການດຳເນີນທຸລະກິດຂອງບັນດາບໍລິສັດຈົດທະບຽນສ່ວນໃຫຍ່ ທີ່ຍັງບໍ່ໂດດເດັ່ນ ແລະ ອັດຕາການຈ່າຍເງິນປັນຜົນ ກໍ່ບໍ່ຈູງໃຈຜູ້ລົງທຶນເທົ່າທີ່ຄວນ. ນອກຈາກນັ້ນ, ການອອກຈຳໜ່າຍພັນທະບັດຂອງທະນາຄານແຫ່ງ ສປປ ລາວ ໃນຊ່ວງປີທີ່ຜ່ານມາ ກໍ່ມີສ່ວນກະທົບ ຕໍ່ກັບສະພາບການຊື້ຂາຍຫຼັກຊັບໃນ ຕະຫຼາດຫຼັກຊັບ ໄລຍະໜຶ່ງ ເນື່ອງຈາກອັດຕາດອກເບ້ຍຂອງພັນທະບັດທະນາຄານແຫ່ງ ສປປ ລາວ ສາມາດດຶງດູດຄວາມສົນໃຈຂອງຜູ້ລົງທຶນ ເປັນຈຳນວນຫຼາຍ.

ເຖິງວ່າສະພາບການໂດຍລວມຂອງຕະຫຼາດທຶນລາວ ຈະມີມູນຄ່າການຊື້ຂາຍທີ່ຫຼຸດລົງກໍ່ຕາມ ແຕ່ການຫຼຸດລົງດັ່ງກ່າວແມ່ນເຫັນວ່າ ມາຈາກປັດໃຈຜູ້ລົງທຶນ ແລະ ຕະຫຼາດທຶນລາວເປັນຫຼັກ ໂດຍບໍ່ໄດ້ຮັບຜົນກະທົບຈາກ ສະພາບການສາກົນເທົ່າທີ່ຄວນ ຊຶ່ງສະແດງໃຫ້ເຫັນຈາກສະພາບການເຄື່ອນໄຫວຂອງລາຄາ ແລະ ມູນຄ່າການຊື້ຂາຍທີ່ບໍ່ມີການເໜັງຕີງ ແລະ ຜິດດ່ຽງສູງໃນໄລຍະເວລາທີ່ສາກົນມີຄວາມອ່ອນໄຫວຕໍ່ບັນດາປັດໃຈທີ່ກະທົບ. ເຖິງສະພາບການຈະເປັນແນວນັ້ນກໍ່ຕາມ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກໍ່ຍັງຄົງເອົາໃຈໃສ່ ແລະ ຕິດຕາມ ພຶດຕິກຳການເຄື່ອນໄຫວຊື້ຂາຍຫຼັກຊັບຢ່າງໃກ້ຊິດ ເພື່ອຮັບປະກັນໃຫ້ເກີດການຊື້ຂາຍ ທີ່ຍຸດຕິທຳ.

ຄຽງຄູ່ກັນນີ້, ເພື່ອເປັນການພັດທະນາຕະຫຼາດທຶນ ກໍ່ຄື ເສດຖະກິດຂອງ ສປປ ລາວ, ສຄຄຊ ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງ ແລະ ປັບປຸງກົນໄກຂອງຕະຫຼາດທຶນ ເປັນຕົ້ນແມ່ນ ຊຸກຍູ້ພັນທະບັດລັດຖະບານທີ່ອອກຈຳໜ່າຍໃຫ້ແກ່ບັນດາວິສາຫະກິດໂດຍກົງ ໃຫ້ເລີ່ມທະຍອຍນຳມາອອກຜ່ານ ທະນາຄານແຫ່ງ ສປປ ລາວ ແລະ ນຳມາຂຶ້ນທະບຽນຢູ່ຕະຫຼາດຫຼັກຊັບ ເຮັດໃຫ້ການອອກຈຳໜ່າຍພັນທະບັດລັດຖະບານຜ່ານລະບົບຕະຫຼາດທຶນນັບແຕ່ປີ 2018 ເປັນຕົ້ນມາ ມີຄວາມຄ່ອງຕົວ. ພ້ອມນີ້, ສຄຄຊ ຍັງໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງຊ່ອງທາງເອື້ອອຳນວຍການຊື້ຂາຍ ພັນທະບັດລັດຖະບານຜ່ານຕະຫຼາດທຶນ ໃຫ້ຫຼາຍຍິ່ງຂຶ້ນ.

## II. ການຄຸ້ມຄອງວຽກງານຫຼັກຊັບໃນປີ 2023

### 1.ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1 ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ຄຄຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ ແລະ ຍຸຕິທຳ. ການເຄື່ອນໄຫວໃນໄລຍະໜຶ່ງປີຜ່ານມາ ຄຄຊ ໄດ້ກຳນົດແນວທາງໃນການຄຸ້ມຄອງ, ພິຈາລະນາ ແລະ ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງເອກະສານ ແລະ ຜ່ານການຈັດກອງປະຊຸມຄົບຄະນະຂອງຄະນະກຳມະການຄຸ້ມຄອງຫຼັກຊັບ 02 ຄັ້ງ ເພື່ອພິຈາລະນາບາງບັນຫາທີ່ພົ້ນເດັ່ນ ແລະ ກຳນົດທິດທາງການຈັດຕັ້ງປະຕິບັດວຽກງານຈຸດສຸມໃນແຕ່ລະໄລຍະ. ພ້ອມນີ້, ໃນປີ 2023 ໄດ້ປັບປຸງຄະນະກຳມະການ ຄຄຊ ຈຳນວນ 02 ຄັ້ງ ເນື່ອງຈາກການປ່ຽນແປງດ້ານການຈັດຕັ້ງຂອງພາກສ່ວນກ່ຽວຂ້ອງ. ປັດຈຸບັນໂຄງປະກອບບຸກຄະລາກອນຂອງ ຄຄຊ ປະກອບມີ 11 ທ່ານ (ຕາມຮູບພາບ 1).

**ຮູບພາບ 1: ໂຄງປະກອບບຸກຄະລາກອນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ**



## 1.2 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສຄຄຊ ປະຕິບັດພາລະບົດບາດໃນການເປັນກົງຈັກຊ່ວຍວຽກໃຫ້ແກ່ຄະນະ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃນ ສປປ ລາວ ຢ່າງລວມສູນ ເຊິ່ງໃນໄລຍະໜຶ່ງປີຜ່ານມາ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດວຽກງານຄຸ້ມຄອງຫຼັກຊັບດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດຫຼາຍດ້ານ. ຄຽງຄູ່ກັນນີ້, ຄະນະ ສຄຄຊ ກໍ່ໄດ້ຮັບການປັບປຸງເພື່ອນຳພາຊີ້ນຳໃຫ້ມີຄວາມສອດຄ່ອງຕາມເງື່ອນໄຂໃນໄລຍະໃໝ່ ໂດຍໄດ້ສຳເລັດການປະເມີນຜົນລັດຖະກອນໃໝ່ (95%) ບັນຈຸເຂົ້າເປັນພະນັກງານສົມບູນ ຈຳນວນ 4 ທ່ານ ພ້ອມທັງ ຮັບພະນັກງານທົດສອບວຽກ 1 ທ່ານ ຕາມວິຊາສະເພາະຢ່າງ ເໝາະສົມ. ຮອດປັດຈຸບັນ, ສຄຄຊ ມີພະນັກງານທັງໝົດ 47 ທ່ານ (ຍິງ 24 ທ່ານ), ໃນນີ້ ປະກອບດ້ວຍຄະນະ ສຄຄຊ 4 ທ່ານ (ຍິງ 2 ທ່ານ), ຄະນະພະແນກ 16 ທ່ານ (ຍິງ 6 ທ່ານ), ວິຊາການ 26 ທ່ານ (ຍິງ 15 ທ່ານ) ແລະ ທົດສອບວຽກ 1 ທ່ານ.

**ຮູບພາບ 2: ໂຄງປະກອບບຸກຄະລາກອນ ຂອງຄະນະ ສຄຄຊ**



### ຮູບພາບ 3: ໂຄງປະກອບບຸກຄະລາກອນ ຂອງ ສຄຄຊ




### ຮູບພາບ 4: ພະນັກງານ ຂອງ ສຄຄຊ



## 2. ຜົນສຳເລັດທີ່ພົ້ນເດັ່ນ ໃນປີ 2023

ໃນປີ 2023 ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານວິຊາສະເພາະຂອງຕົນຢ່າງຕັ້ງໜ້າ ໂດຍປະຕິບັດຕາມແຜນງານ, ໂຄງການ, ໜ້າວຽກທີ່ກຳນົດໄວ້ ພ້ອມທັງ ມີການຕິດຕາມ ແລະ ຖອດຖອນບົດຮຽນຕໍ່ການເຄື່ອນໄຫວວຽກງານຢ່າງໃກ້ຊິດ ເຮັດໃຫ້ສາມາດຍາດໄດ້ຜົນສຳເລັດໃນຫຼາຍດ້ານ ຊຶ່ງສາມາດສັງລວມລາຍລະອຽດໄດ້ດັ່ງນີ້:

### 2.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

#### 2.1.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ບົນພື້ນຖານການສົມທົບກັບພາກສ່ວນກ່ຽວຂ້ອງ ສຄຄຊ ໄດ້ສຳເລັດການປັບປຸງ ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ຊຶ່ງ ທ່ານ ນາຍົກລັດຖະມົນຕີ ໄດ້ອອກ ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ຍຸດທະສາດດັ່ງກ່າວ ເປັນທີ່ຮຽບຮ້ອຍແລ້ວ. ນອກຈາກນັ້ນ, ສຄຄຊ ຍັງໄດ້ສຳເລັດການຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ທັງໝົດ ຈຳນວນ 07 ສະບັບ (ສ້າງໃໝ່ 03 ສະບັບ ແລະ ປັບປຸງ 04 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບໃນແຕ່ລະໄລຍະ. ອັນທີ່ພົ້ນເດັ່ນ ມີດັ່ງລຸ່ມນີ້:

**ຕາຕະລາງທີ 1: ສັງລວມລາຍຊື່ນິຕິກຳ ທີ່ສຳເລັດໃນປີ 2023**

| ລຳດັບ | ລາຍຊື່ນິຕິກຳ ທີ່ສຳເລັດ ໃນປີ 2023 |
|---|---|
| 1 | ຂໍ້ຕົກລົງວ່າດ້ວຍ ການກວດກາບໍລິສັດຫຼັກຊັບ (ປັບປຸງ) |
| 2 | ຂໍ້ຕົກລົງວ່າດ້ວຍ ການຂໍອະນຸຍາດດຳເນີນທຸລະກິດຂອງ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ (ປັບປຸງ) |
| 3 | ຂໍ້ຕົກລົງວ່າດ້ວຍ ການມອບວຽກຊີ້ນຳ-ນຳພາການເຄື່ອນໄຫວ ກ່ຽວກັບວຽກງານຫຼັກຊັບ ຈາກ ປະທານ ຄຄຊ ໃຫ້ຮອງປະທານ ຄຄຊ (ໃໝ່) |
| 4 | ຂໍ້ຕົກລົງວ່າດ້ວຍ ການຮັບຮອງບໍລິສັດກວດສອບ ແລະ ຜູ້ກວດສອບ (ປັບປຸງ) |
| 5 | ຄຳແນະນຳວ່າດ້ວຍ ກົນໄກການຈັດຕັ້ງປະຕິບັດວຽກງານກວດກາພາຍໃນ ຂອງ ສຄຄຊ (ໃໝ່) |
| 6 | ຄຳແນະນຳວ່າດ້ວຍ ການສ້າງ ແລະ ປັບປຸງນິຕິກຳຂອງອົງການຄຸ້ມຄອງວຽກງານຫຼັກຊັບ (ປັບປຸງ) |
| 7 | ແຈ້ງການເລື່ອງ ການປະເມີນການຈັດຕັ້ງປະຕິບັດ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ (ໃໝ່) |

ຮອດປັດຈຸບັນ, ນິຕິກຳໃນຂົງເຂດວຽກງານຫຼັກຊັບ ປະກອບມີ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ນິຕິກຳໃຕ້ກົດໝາຍສະບັບດັ່ງກ່າວ ທັງໝົດຈຳນວນ 98 ສະບັບ (ຕົວເລກຄືງທີ່ທຽບໃສ່ປີ 2022).

### 2.1.2 ນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ

ເພື່ອສືບຕໍ່ດຶງດູດ ແລະ ຊຸກຍູ້ການເຂົ້າຮ່ວມ ແລະ ປະກອບສ່ວນໃນວຽກງານຕະຫລາດທຶນ, ສຄຄຊ ໄດ້ສົມທົບກັບ ກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ປຶກສາຫາລື ແລະ ຄົ້ນຄວ້າກ່ຽວກັບ ບັນຫາ, ວິທີແກ້ໄຂ ແລະ ນະໂຍບາຍອາກອນ ແລະ ບໍ່ແມ່ນອາກອນ ທີ່ຕິດພັນກັບການພັດທະນາວຽກງານຕະຫຼາດທຶນ ໃນແຕ່ລະໄລຍະ ໂດຍສະເພາະ ໄດ້ທົບທວນຜົນການຈັດຕັ້ງປະຕິບັດນະໂຍບາຍທີ່ກ່ຽວຂ້ອງ ໃນໄລຍະຜ່ານມາ ແລະ ທິດທາງການພັດທະນາຕະຫຼາດທຶນໃນຕໍ່ໜ້າ. ຊຶ່ງຜ່ານການຄົ້ນຄວ້າຮ່ວມກັນ ແມ່ນເຫັນດີເປັນເອກະພາບທີ່ຈະປັບຫຼຸດອາກອນກຳໄລເພີ່ມຕື່ມ ທັງອັດຕາສ່ວນຫຼຸດ ແລະ ໄລຍະເວລາ ຊຶ່ງຈະປັບປຸງໃນກົດໝາຍວ່າດ້ວຍອາກອນລາຍໄດ້ ທີ່ເຂົ້າຜ່ານສະພາແຫ່ງຊາດ ໃນທ້າຍປີ 2024.

## 2.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

❖ **ການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ**

ໃນປີ 2023 ສຄຄຊ ໄດ້ສຳເລັດການຄົ້ນຄວ້າອະນຸມັດໃຫ້ບໍລິສັດລະດົມທຶນຜ່ານຕະຫຼາດທຶນ ຈຳນວນ 5 ກໍລະນີ ຄື: ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຈຳນວນ 3 ຄັ້ງ ແລະ ບໍລິສັດ ໄຊຍະບູລີ ພາວເວີ ຈຳກັດ ຈຳນວນ 1 ຄັ້ງ ອອກຈຳໜ່າຍຮຸ້ນກູ້ ຢູ່ປະເທດໄທ ໃນມູນຄ່າບໍ່ເກີນ 8.359 ລ້ານບາດ ແລະ ມູນຄ່າບໍ່ເກີນ 5.000 ລ້ານບາດ ຕາມລຳດັບ ພ້ອມທັງ ອະນຸຍາດໃຫ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຢູ່ພາຍໃນປະເທດ ຈຳນວນ 1 ຄັ້ງ ໃນມູນຄ່າບໍ່ເກີນ 3 ລ້ານ ໂດລາສະຫະລັດ ຫຼື ທຽບເທົ່າ 10,443.78 ຕື້ກີບ ເພີ່ມຂຶ້ນ 02 ເທົ່າທຽບໃສ່ປີ 2022.

**ຕາຕະລາງທີ 2: ສັງລວມການລະດົມທຶນຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ແຕ່ປີ 2010-2023.**

ຫົວໜ່ວຍ: ຕື້ກີບ

| ປີ | 2010 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | 2021 | 2022 | 2023 | ລວມ |
|---|---|---|---|---|---|---|---|---|---|---|---|---|---|---|
| ລະດົມທຶນພາຍໃນ | 1,237 | 1,611 | 40 | 240 | 2,832 | - | 458 | 69 | 332 | - | - | - | 53 | 6,872 |
| ລະດົມທຶນຢູ່ຕ່າງປະເທດ | - | - | - | 1,625 | - | 2,558 | 1,500 | 5,349 | 1,620 | 494 | 1,892 | 4,258 | 3,988 | 23,284 |
| **ລວມ** | **1,237** | **1,611** | **40** | **1,865** | **2,832** | **2,558** | **1,958** | **5,418** | **1,952** | **494** | **1,922** | **4,219** | **4,041** | **30,147** |

ໂດຍລວມແລ້ວ, ນັບແຕ່ປີ 2010-2023 ຍອດສະສົມການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຢູ່ຕ່າງປະເທດ ລວມທັງໝົດ 30,147 ຕື້ກີບ (ຍັງບໍ່ລວມພັນທະບັດ) ກວມເອົາ 14.2% ຂອງ GDP ເຊິ່ງທຶນດັ່ງກ່າວ ໄດ້ນຳໃຊ້ເຂົ້າໃນການຂະຫຍາຍທຸລະກິດ ເປັນຕົ້ນແມ່ນ ສ້າງເຂື່ອນໄຟຟ້າ, ສ້າງປ້ຳນ້ຳມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນ້ຳມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ ແລະ ການທະນາຄານ, ນຳໃຊ້ເປັນທຶນໝູນວຽນ ໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ຮອດທ້າຍປີ 2023, ບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບ ມີທັງໝົດ 10 ແຫ່ງ (ຫຼຸດລົງ 1 ແຫ່ງທຽບໃສ່ປີຜ່ານມາ) (ລາຍຊື່ບັນດາບໍລິສັດຈົດທະບຽນ ຢູ່ໃນເອກະສານຊ້ອນທ້າຍ 1).

ພ້ອມດຽວກັນນັ້ນ, ສຄຄຊ ໄດ້ຕິດຕາມລາຍງານການຈັດຕັ້ງປະຕິບັດການຊື້ຂາຍ ພັນທະບັດລັດຖະບານ ຢ່າງເປັນປົກກະຕິ ເຊິ່ງໃນປີ 2023 ສຳເລັດການຂາຍພັນທະບັດມູນຄ່າ 3,708.11 ຕື້ກີບ (02/2023 – 12/2023), ສະກຸນເງິນໂດລາ 55,48 ລ້ານໂດລາສະຫະລັດ (02/2023-12/2023) ແລະ 3,000 ລ້ານບາດ (02/2023-12/2023), ຍອດລວມມູນຄ່າທັງໝົດນັບແຕ່ເລີ່ມອອກຂາຍຈົນຮອດທ້າຍປີ 2023 ແມ່ນ 9,095.11 ຕື້ກີບ (12/2018 – 12/2023) ສະກຸນເງິນໂດລາມູນຄ່າ 128,78 ລ້ານໂດລາສະຫະລັດ (09/2020 – 12/2023) ແລະ 3,000 ລ້ານບາດ (09/2020 – 12/2023). ຊຶ່ງທຶນທີ່ລະດົມໄດ້ດັ່ງກ່າວ ໄດ້ປະກອບສ່ວນໃນການ ບໍລິຫານທົ່ວໄປຂອງລັດຖະບານ, ດັດສົມງົບປະມານ ແລະ ລົງທຶນໃນ ໂຄງການຕ່າງໆຂອງລັດຖະບານ.

**ຕາຕະລາງທີ 3: ສັງລວມສະພາບການອອກຈຳໜ່າຍພັນທະບັດລັດຖະບານ (ຮອດທ້າຍປີ 2023)**

| ລ/ດ | ລາຍການປີທີ່ອອກ | ຈຳນວນອອກ | ສະກຸນເງິນ | ຈຳນວນທີ່ຂາຍໄດ້ | ຄິດເປັນ % |
|---|---|---|---|---|---|
| 1 | 2018 | 1,000,000,000,000 | ກີບ | 1,000,000,000,000 | 100.00 |
| 2 | 2019 | 1,700,000,000,000 | ກີບ | 1,700,000,000,000 | 100.00 |
| 3 | 2020-2022 | 1,500,000,000,000 | ກີບ | 987,541,800,000 | 65.84 |
| 4 | 2020-2022 | 1,700,000,000,000 | ກີບ | 1,699,458,200,000 | 99.97 |
| 5 | 2023 | 1,000,000,000,000 | ກີບ | 1,000,000,000,000 | 100.00 |
| 6 | 2023 | 1,500,000,000,000 | ກີບ | 1,500,000,000,000 | 100.00 |
| 7 | 2023 | 1,500,000,000,000 | | 1,175,242,300,000 | 78.35 |
| 8 | 2023 | 1,500,000,000,000 | | 32,873,500,000 | 2.91 |
| 9 | 2020 | 50,000,000 | ໂດລາ | 50,000,000 | 100.00 |
| 10 | 2021 | 50,000,000 | ໂດລາ | 23,294,500 | 46.59 |
| 11 | 2023 | 50,000,000 | ໂດລາ | 50,000,000 | 100.00 |
| 12 | 2023 | 100,000,000 | ໂດລາ | 5,489,400 | 5.49 |
| | 2023 | 3,000,000,000 | ບາດ | 3,000,000,000 | 100.00 |
| **ລວມທັງໝົດ** | | **11,400,000,000,000** | **ກີບ** | **9,095,118,800,000** | **79.78** |
| **ລວມທັງໝົດ** | | **250,000,000** | **ໂດລາ** | **128,783,900** | **51.51** |

| | | | | |
|---|---|---|---|---|
| ລວມທັງໝົດ | 3,000,000,000 | ບາດ | 3,000,000,000 | 100.00 |

❖ **ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ**

ສຄຄຊ ເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍ ແລະ ບໍລິສັດຈົດທະບຽນ ດ້ວຍການຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ, ການຈ່າຍເງິນປັນຜົນ ແລະ ການນຳໃຊ້ທຶນ ແລະ ລົງຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຂອງບໍລິສັດຈົດທະບຽນ 11 ແຫ່ງ ລວມຈຳນວນ 13 ຄັ້ງ (ສາມັນ 11 ຄັ້ງ ແລະ ວິສາມັນ 2 ຄັ້ງ) ແລະ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ສຄຄຊ ໄດ້ຊຸກຍູ້ໃຫ້ບັນດາບໍລິສັດຈົດທະບຽນເຂົ້າຮ່ວມຝຶກອົບຮົມທີ່ກ່ຽວຂ້ອງກັບການໃຫ້ຄວາມຮູ້ທາງດ້ານມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ຄົ້ນຄວ້າຂຶ້ນແຜນຂອງຕົນເອງເພື່ອກ້າວໄປສູ່ການຈັດຕັ້ງປະຕິບັດມາດຕະຖານ IFRS ໃນປີ 2026. ພ້ອມນັ້ນ, ສຄຄຊ ໄດ້ຊຸກຍູ້ ແລະ ຕິດຕາມ ຕະຫຼາດຫຼັກຊັບ ໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດຄວາມຕ້ອງການທາງດ້ານທຸລະກິດ (Business requirement) ໃນການສ້າງ Platform ສຳລັບ CG Scorecard ໃນຮູບແບບອອນລາຍ ທີ່ເປັນມາດຕະຖານ ພ້ອມທັງຊຸກຍູ້ ແລະ ຕິດຕາມການສ້າງຄູ່ມືແນະນຳການປະເມີນການຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບ ຄຽງຄູ່ກັບການສ້າງ Platform ດັ່ງກ່າວ ແລະ ຕິດຕາມຜົນການປະເມີນການຈັດຕັ້ງປະຕິບັດຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນ 8 ແຫ່ງ.

## 2.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

❖ **ການຄຸ້ມຄອງຕະຫຼາດຫຼັກຊັບ**

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບ ຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານ ປະຈຳເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ ປະຈຳປີ 2022 ຈຳນວນ 1 ຄັ້ງ ໂດຍລົງເລິກ ກວດກາລະບົບການຊື້ຂາຍ, ການເກັບຮັກສາຂໍ້ມູນ, ເອກະສານລາຍງານການເງິນ ແລະ ການເຄື່ອນໄຫວວຽກງານຂອງ ຕະຫຼາດຫຼັກຊັບ. ຜ່ານການກວດກາຕົວຈິງ ເຫັນວ່າການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບ ເປັນປົກກະຕິ ຊຶ່ງຜົນການກວດກາປີ 2023 ໄດ້ສະແດງໃຫ້ເຫັນເຖິງຄວາມພະຍາຍາມຂອງ ຕະຫຼາດຫຼັກຊັບ ໃນການສືບຕໍ່ປັບປຸງ ແລະ ພັດທະນາທຸລະກິດຂອງຕົນ ໂດຍການສືບຕໍ່ຄົ້ນຄວ້າສ້າງແຜນທຸລະກິດ ແລະ ແຜນພັດທະນາພື້ນຖານໂຄງລ່າງ ໂດຍສະເພາະແມ່ນ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ໄດ້ນຳເຂົ້າຜ່ານກອງປະຊຸມຜູ້ຖືຮຸ້ນ ຂອງ ຕະຫຼາດຫຼັກຊັບ ໃນທ້າຍປີ 2023 ເພື່ອພິຈາລະນາການແຜນພັດທະນາໃຫ້ມີຄວາມເໝາະສົມໃນແຕ່ລະໄລຍະ. ເຖິງຢ່າງໃດກໍ່ຕາມໃນປີ 2023 ນີ້ ຕະຫຼາດຫຼັກຊັບ ກໍ່ຍັງບໍ່ສາມາດບັນລຸຄາດໝາຍ ໃນການນຳບໍລິສັດເຂົ້າຈົດທະບຽນໃນ ຕະຫຼາດຫຼັກຊັບ ໄດ້ຕາມເປົ້າໝາຍທີ່ກຳນົດໄວ້.

❖ **ການຄຸ້ມຄອງການເຄື່ອນໄຫວໃນຕະຫຼາດຂັ້ນສອງ**

ມູນຄ່າຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ໃນວັນທີ 20 ທັນວາ 2023 ມີມູນຄ່າ 14,083.59 ຕື້ກີບ. ດັດຊະນີ ຕະຫຼາດຫຼັກຊັບ ໃນທ້າຍປີ 2023 ປິດຢູ່ທີ່ 1,079.42 ຈຸດ ເພີ່ມຂຶ້ນ 50.49% ທຽບໃສ່ດັດຊະນີຂອງ ທ້າຍປີ 2022 ໂດຍມີມູນຄ່າການຊື້ຂາຍທັງໝົດ 24.85 ຕື້ກີບ ຫຼຸດລົງ 37.82% ເມື່ອທຽບໃສ່ປີ 2022 ໃນນັ້ນ, ເປັນການຊື້ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 38.65% ແລະ ສັງເກດເຫັນວ່າ ດັດຊະນີຕະຫຼາດຫຼັກຊັບ ປັບຕົວເພີ່ມຂຶ້ນຕໍ່ເນື່ອງ ເຖິງລະດັບ 1,000 ຈຸດເປັນປີທຳອິດ ນັບແຕ່ປີ 2017 ເປັນຕົ້ນມາ. ສາເຫດຫຼັກມາຈາກການປັບຕົວເພີ່ມຂຶ້ນຂອງ

ລາຄາຮຸ້ນ LALCO ທີ່ປັບຕົວເພີ່ມຂຶ້ນສູງສຸດໃນໄລຍະໄຕມາດ 1 ຂອງປີ 2023 ແລະ ຄົງຕົວຢູ່ຈົນຮອດປະຈຸບັນ ພ້ອມກັບການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ LWPC ດ້ວຍການກຳນົດລາຄາເກັບຊື້ຮຸ້ນຄືນກ່ອນຈະມີການຖອນຮຸ້ນຈົດທະບຽນອອກຈາກ ຕະຫຼາດຫຼັກຊັບ ເປັນຮຸ້ນທຳອິດ. ສຳລັບ ມູນຄ່າການຊື້ຂາຍຮຸ້ນ ເຫັນວ່າ ມູນຄ່າການຊື້ຂາຍຮຸ້ນ BCEL ແລະ ຮຸ້ນ EDL-GEN ມີທ່າອ່ຽງຫຼຸດລົງຕໍ່ເນື່ອງ ພ້ອມດ້ວຍລາຄາທີ່ຫຼຸດລົງ, ແຕ່ເຖິງຢ່າງໃດກໍ່ຕາມມູນຄ່າການຊື້ຂາຍທັງສອງຮຸ້ນດັ່ງກ່າວ ກໍ່ຍັງເປັນຮຸ້ນຫຼັກ ທີ່ສ້າງສະພາບຄ່ອງໃຫ້ ຕະຫຼາດຫຼັກຊັບ.  ນອກນັ້ນ, ຍັງມີການເຄື່ອນໄຫວຊື້ຂາຍຂອງ ຜູ້ລົງທຶນຕ່າງປະເທດ ຕໍ່ກັບຮຸ້ນດັ່ງກ່າວ ແລະ ຮຸ້ນລາຍອື່ນ ທີ່ມີທ່າອ່ຽງຫຼຸດລົງໃນປີນີ້, ເຖິງແມ່ນວ່າຫຼາຍບໍລິສັດຈະມີການປະກາດວ່າຈະຈ່າຍເງິນປັນຜົນກໍ່ຕາມ ແຕ່ກໍ່ຍັງບໍ່ມີຄວາມພົ້ນເດັ່ນພໍ ທີ່ຈະດຶງດູດຜູ້ລົງທຶນຕ່າງປະເທດໄດ້ເທົ່າກັບປີຜ່ານມາ ຊຶ່ງອາດເນື່ອງມາຈາກສະພາບເສດຖະກິດທີ່ເຮັດໃຫ້ຜູ້ລົງທຶນ ຍັງລໍຖ້າການລົງທຶນ.

**ແຜນວາດ 1: ມູນຄ່າການຊື້ຂາຍຮຸ້ນ ທຽບກັບ ດັດສະນີຂອງ ຕະຫຼາດຫຼັກຊັບ (11 ມັງກອນ 2011 – 20 ທັນວາ 2023)**

ຫົວໜ່ວຍ: 1 ລ້ານກີບ



ແຜນວາດ 2: ການເໜັງຕີງລາຄາຮຸ້ນ EDL GEN, BCEL, LWPC, PTL, SVN, PCD, LCC, MHTL LAT, VCL ແລະ LALCO (04 ມັງກອນ ຫາ 28 ທັນວາ 2023)




## 2.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິ ດ້ວຍຮູບການກວດກາທາງເອກະສານປະຈຳເດືອນ, ໄຕມາດ, 6 ເດືອນຕົ້ນປີ ແລະ ປະຈຳປີ. ນອກນັ້ນ, ຍັງໄດ້ມີການຈັດກອງປະຊຸມປະຈຳໄຕມາດລະຫວ່າງ ສຄຄຊ ແລະ ບໍລິສັດຫຼັກຊັບ ເພື່ອປຶກສາຫາລືຕໍ່ກັບສະພາບ ແລະ ທິດທາງໃນການດຳເນີນທຸລະກິດໃນແຕ່ລະໄລຍະ; ສຳເລັດການລົງກວດກາແບບແບບປົກກະຕິ ແລະ ແບບສຸກເສີນ ລວມຈຳນວນ 6 ຄັ້ງ ແລະ ໄດ້ນຳໃຊ້ຂໍ້ມູນຈາກການລົງກວດກາ ເຂົ້າໃນການປະເມີນລະດັບຄວາມສ່ຽງໃນແຕ່ລະດ້ານຂອງບໍລິສັດຫຼັກຊັບ ຕາມຫຼັກການຕີລາຄາຄວາມສ່ຽງ (Risk-Based Supervision). ຊຶ່ງຜ່ານການກວດກາສາມາດຕີລາຄາໄດ້ວ່າ ບໍລິສັດຫຼັກຊັບ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນເປັນຢ່າງດີ ແຕ່ກໍ່ມີບັນຫາຂໍ້ຄົງຄ້າງຕາມຜົນການລົງກວດກາ ປະຈຳປີ 2022 ຈຳນວນໜຶ່ງ ຊຶ່ງ ສຄຄຊ ໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອດຳເນີນການແກ້ໄຂຂໍ້ຄົງຄ້າງດັ່ງກ່າວ. ໄດ້ສືບຕໍ່ຊຸກຍູ້ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບ ໃນການຄົ້ນຄວ້າພັດທະນາລະບົບການຊື້ຂາຍຫຼັກຊັບ ຜ່ານມືຖື (Mobile Trading System). ສຳເລັດການຮັບຮອງການປ່ຽນຊື່ຂອງ ບໍລິສັດຫຼັກຊັບ 01 ຄັ້ງ, ຮັບຮອງສະພາບໍລິຫານ ຈຳນວນ 02 ຄັ້ງ ແລະ

ຕໍ່ອາຍຸການຂອງຜູ້ອຳນວຍການ 01 ຄັ້ງ, ຮັບຮອງສະມາຊິກສະພາບໍລິຫານອິດສະຫຼະ ຈຳນວນ 01 ຄັ້ງ. ສຳລັບການຈັດຕັ້ງປະຕິບັດວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (Anti-money laundering: AML) ສຄຄຊ ໄດ້ຊຸກຍູ້ໃຫ້ບັນດາບໍລິສັດຫຼັກຊັບຍົກສູງສະຕິຄວາມຮັບຜິດຊອບ ແລະ ຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ. ນອກນີ້, ເພື່ອສ້າງບຸກຄະລາກອນຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ໃຫ້ມີຄວາມຮູ້ຢ່າງມືອາຊີບ ແລະ ເປັນຊ່ຽວຊານສະເພາະດ້ານ ໄດ້ສຳເລັດຊຸກຍູ້ຕະຫຼາດຫຼັກຊັບ ຄົ້ນຄວ້າຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ເພີ່ມອີກຈຳນວນ 2 ຫຼັກສູດ ເປັນຕົ້ນຫຼັກສູດຜູ້ບໍລິຫານກອງທຶນເພື່ອການລົງທຶນ ແລະ ຫຼັດສູດທີ່ປຶກສາທາງດ້ານການເງິນ ແລະ ຊຸກຍູ້ຈັດຫຼັກສູດນັກວິຊາຊີບທີ່ໄດ້ຮັບຮອງແລ້ວ ຈຳນວນ 03 ຫຼັກສູດ/1 ຄັ້ງ/ຫຼັດສູດ ໃນນີ້ ປະກອບມີ: ປະເພດວິເຄາະຫຼັກຊັບ 01 ຄັ້ງ, ປະເພດນາຍໜ້າຊື້ຂາຍຫຼັກຊັບ 01 ຄັ້ງ ແລະ ປະເພດທີ່ປຶກສາທາງດ້ານການເງິນ 01 ຄັ້ງ.

ສຳລັບການຄຸ້ມຄອງ ບັນດາສະຖາບັນສີກາງດ້ານຫຼັກຊັບອື່ນ ທີ່ຖືກຮັບຮອງຈາກ ສຄຄຊ ໃຫ້ເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບນັ້ນ, ສຄຄຊ ໄດ້ເອົາໃຈໃສ່ຕິດຕາມກວດກາບັນດາສະຖາບັນດັ່ງກ່າວຜ່ານທາງເອກະສານ ຢ່າງເປັນປົກກະຕິ, ພົ້ນເດັ່ນແມ່ນໄດ້ ສຳເລັດການຄົ້ນຄວ້າກຳນົດຜູ້ຄຸ້ມຄອງຫຼັກຂອງບໍລິສັດປະເມີນມູນຄ່າຊັບສິນ ຢູ່ ສປປ ລາວ ໂດຍຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໄດ້ມອບໃຫ້ ກະຊວງການເງິນ ເປັນຜູ້ຄຸ້ມຄອງຫຼັກ; ສຳເລັດການຈັດກອງປະຊຸມຊຸກຍູ້ບໍລິສັດກວດສອບທີ່ເຄື່ອນໄຫວໃນ ສປປ ລາວ ເພື່ອກະກຽມຄວາມພ້ອມເຂົ້າມາເຄື່ອນໄຫວໃຫ້ບໍລິການ ໃນກະດານຮອງ ຈຳນວນ 01 ຄັ້ງ; ສຳເລັດການລົງກວດກາສະຖາບັນສີກາງດ້ານຫຼັກຊັບອື່ນໆ ປະຈຳປີ 2023 ຈຳນວນ 14 ຄັ້ງ 14 ບໍລິສັດ ແລະ ສຳເລັດການຮັບຮອງ ແລະ ຕໍ່ອາຍຸສະຖາບັນສີກາງດ້ານຫຼັກຊັບອື່ນ ຈຳນວນ 10 ແຫ່ງ.

ນອກຈາກນີ້, ສຄຄຊ ໄດ້ຖືສຳຄັນໃນການຄຸ້ມຄອງ ແລະ ກໍ່ສ້າງນັກວິຊາຊີບ ໃນຂົງເຂດວຽກງານຫຼັກຊັບ ແນໃສ່ຮັບປະກັນໃຫ້ການບໍລິການແກ່ລູກຄ້າ ມີປະສິດທິພາບ, ສອດຄ່ອງຕາມລະບຽບກົດໝາຍ ແລະ ຖືກຕ້ອງຕາມມາດຕະຖານຂອງວິຊາຊີບທີ່ກ່ຽວຂ້ອງ, ອັນພົ້ນເດັ່ນ ໄດ້ສຳເລັດການຊຸກຍູ້ຕະຫຼາດຫຼັກຊັບ ຈັດຫຼັກສູດນັກວິຊາຊີບ ຈຳນວນ 03 ຄັ້ງ ມີຜູ້ເຂົ້າຮ່ວມ 110 ເທື່ອຄົນ; ສຳເລັດການຄົ້ນຄວ້າອອກ-ຕໍ່ອາຍຸໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 11 ທ່ານ, ຜູ້ກວດສອບບັນຊີ 11 ທ່ານ ແລະ ຜູ້ປະເມີນມູນຄ່າຊັບສິນ 01 ທ່ານ;

ຮອດປັດຈຸບັນ ມີຈຳນວນສະຖາບັນສີກາງດ້ານຫຼັກຊັບ ແລະ ຊົມລົມທີ່ກ່ຽວຂ້ອງ ລວມທັງໝົດ ຈຳນວນ 32 ແຫ່ງ ໃນນັ້ນ, ມີບໍລິສັດຫຼັກຊັບ 04 ແຫ່ງ, ບໍລິສັດກວດສອບ 04 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 08 ແຫ່ງ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື 01 ແຫ່ງ, ທະນາຄານດູແລຊັບສິນ 04 ແຫ່ງ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ 04 ແຫ່ງ, ທະນາຄານຕົວແທນເພື່ອການຊຳລະ-ສະສາງໃນວຽກງານຫຼັກຊັບ 04 ແຫ່ງ, ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ 01 ແຫ່ງ, ຊົມລົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ 01 ແຫ່ງ ແລະ ຊົມລົມບໍລິສັດປະເມີນມູນຄ່າຊັບສິນ 01 ແຫ່ງ. ຄຽງຄູ່ກັນນັ້ນ, ນັກວິຊາຊີບທີ່ຖືກຮັບຮອງໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ທັງໝົດ 63 ຄົນ ໃນນີ້, ນັກວິຊາຊີບທຸລະກິດຫຼັກຊັບ 22 ຄົນ (ທີ່ປຶກສາທາງດ້ານການເງິນ 07 ຄົນ, ນາຍໜ້າຊື້ຂາຍຫຼັກຊັບ 08 ຄົນ, ຜູ້ວິເຄາະຫຼັກຊັບ 02 ຄົນ, ຜູ້ຄ້າຫຼັກຊັບ 03 ຄົນ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ 01 ຄົນ ແລະ ທີ່ປຶກສາການລົງທຶນ 01 ຄົນ), ນັກວິຊາຊີບກວດສອບ 21 ຄົນ ແລະ ນັກວິຊາຊີບປະເມີນມູນຄ່າຊັບສິນ 20 ຄົນ.

## 2.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ອີງຕາມຄຳສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ກ່ຽວກັບການປັບປຸງຕົວຊີ້ວັດຂອງບົດລາຍງານການດຳເນີນທຸລະກິດ ຂອງ ສປປ ລາວ ເລກທີ 02/ນຍ[1] ລົງວັນທີ 01 ກຸມພາ 2018 ຕິດພັນກັບການຄຸ້ມຄອງວຽກງານຫຼັກຊັບ, ໃນໄລຍະຜ່ານມາ ສຄຄຊ ໄດ້ສຳເລັດການສ້າງ ແລະ ປັບປຸງນິຕິກຳໃນຂົງເຂດວຽກງານຫຼັກຊັບ ທີ່ກ່ຽວຂ້ອງກັບການປັບປຸງຕົວຊີ້ວັດດັ່ງກ່າວ ຈຳນວນໜຶ່ງ ແລະ ໄດ້ປະກອບສ່ວນຄົ້ນຄວ້າການປັບປຸງກົດໝາຍວ່າດ້ວຍວິສາຫະກິດ. ພ້ອມນີ້, ກໍ່ໄດ້ຕິດຕາມສານປະຊາຊົນສູງສຸດ ໃນການປັບປຸງກົດໝາຍວ່າການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍຄ່າທຳນຽມສານ ຕໍ່ເນື້ອໃນທີ່ຕິດພັນກັບວຽກງານຫຼັກຊັບ.

ຄຽງຄູ່ກັນນີ້, ສຄຄຊ ຍັງໄດ້ສຳເລັດການຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດນອກວັດຖຸປະສົງຈຳນວນໜຶ່ງ ພ້ອມທັງ, ປະສານຫາພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ ແລະ ພິຈາລະນາດຳເນີນການແກ້ໄຂ ແລະ ສະໜອງຂໍ້ມູນທີ່ຈຳເປັນຕິດພັນກັບວຽກງານຫຼັກຊັບໃຫ້ແກ່ການດຳເນີນຄະດີຂອງເຈົ້າໜ້າທີ່ຕຳຫຼວດ. ພ້ອມນີ້, ກໍ່ໄດ້ສືບຕໍ່ເປີດນຳໃຊ້ຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ໃນກໍລະນີສົງໃສວ່າມີການລະເມີດລະບຽບກົດໝາຍໃນຂົງເຂດວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 04 ຊ່ອງທາງ ດັ່ງລຸ່ມນີ້:

1) ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຕຶກຫ້ອງການ ສຄຄຊ;
2) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໄປສະນີ;
3) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);
4) ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).

## 2.6 ການບັງຄັບໃຊ້ກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຫຼັກຊັບ

ໃນປີ 2023 ສຄຄຊ ໄດ້ເອົາໃຈໃສ່ຕິດຕາມ ແລະ ຈັດຕັ້ງປະຕິບັດນິຕິກຳທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເຊິ່ງຜ່ານການຕິດຕາມ, ກວດກາ ເຫັນວ່າ: ມີບໍລິສັດຈົດທະບຽນ ຈຳນວນໜຶ່ງ ໄດ້ເຄື່ອນໄຫວບໍ່ສອດຄ່ອງກັບ ກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການກ່ຽວຂ້ອງກັບວຽກງານຫຼັກຊັບ ຊຶ່ງ ສຄຄຊ ໄດ້ຄົ້ນຄວ້າ ແລະ ປະຕິບັດມາດຕະການປັບ ໃໝຕໍ່ ບໍລິສັດຈົດທະບຽນ ຈຳນວນ 1 ກໍລະນີ. ພ້ອມນີ້, ສຄຄຊ ໄດ້ປະສານສົມທົບກັບເຈົ້າໜ້າທີ່ຕຳຫຼວດ ເພື່ອຄົ້ນຄວ້າປະຕິບັດມາດຕະການຕໍ່ກັບ ບໍລິສັດທີ່ເຄື່ອນໄຫວນອກວັດຖຸປະສົງ 2 ແຫ່ງ ທີ່ໄດ້ມີການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ.

## 2.7 ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່

ສຄຄຊ ໄດ້ສຸມໃສ່ພັດທະນາວຽກງານຝຶກອົບຮົມກ່ຽວກັບວຽກງານຕະຫຼາດທຶນ ໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ ເຊິ່ງໃນປີ 2023 ໄດ້ສຳເລັດການສ້າງຫຼັກສູດຝຶກອົບຮົມ 4 ຫຼັກສູດຄື: 1) ການບໍລິຫານການລົງທຶນໃນກຸ່ມຫຼັກຊັບ (Portfolio Management), 2) ນັກວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາດ້ານການລົງທຶນ (Investment Advisory), 3) ນັກວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາທາງດ້ານການເງິນ (Financial Advisor) ແລະ 4) ນັກວິຊາຊີບທຸລະກິດຫຼັກຊັບປະເພດຜູ້ບໍລິຫານກອງທຶນ (fund Manager); ສຳເລັດການຈັດຝຶກອົບຮົມຫຼັກສູດ ຝຶກອົບຮົມ

[1] ຄຳສັ່ງເລກທີ 02/ນຍ: ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

ສຳລັບຜູ້ບໍລິຫານທີ່ມີຄຸນນະພາບ ເພື່ອການບໍລິຫານແບບມືອາຊີບ (Board Leadership Program) ຈຳນວນ 2 ຄັ້ງ ແລະ ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 36 ເທື່ອຄົນ; ສຳເລັດການຈັດຝຶກອົບຮົມ ໄລຍະສັ້ນໃຫ້ ຄູ-ອາຈານ, ບັນດາມວນຊົນທົ່ວໄປ (ພະນັກງານລັດ, ເອກະຊົນ, ສະຖາບັນການເງິນ, ທະນາຄານ ແລະ ວິສາຫະກິດຕ່າງໆ) ພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ຈຳນວນ 15 ຄັ້ງ, 3 ຫົວຂໍ້ ແລະ  ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 439 ທ່ານ; ສຳເລັດການຈັດຝຶກອົບຮົມບັນດາລະບຽບການທີ່ຕິດພັນກັບວຽກງານຫຼັກຊັບ ທີ່ມີການປັບປຸງ ແລະ ສ້າງໃໝ່ ໃຫ້ນັກວິຊາຊີບທຸລະກິດຫຼັກຊັບ (Refressment) ຈຳນວນ 1 ຄັ້ງ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 38 ເທື່ອຄົນ ຈາກ 4 ບໍລິສັດຫຼັກຊັບ.

ພ້ອມດຽວກັນນີ້, ກໍ່ໄດ້ມີການໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ແກ່ບັນດາມວນຊົນທົ່ວໄປ (ພະນັກງານລັດ, ເອກະຊົນ, ສະຖາບັນການສຶກສາ, ສະຖາບັນການເງິນ ແລະ ວິສາຫະກິດຕ່າງໆ) ເພື່ອເປັນການໃຫ້ຄວາມຮູ້, ຄວາມເຂົ້າໃຈ ແລະ ສາມາດເປັນສ່ວນໜຶ່ງໃນການເປັນສ່ວນຮ່ວມໃນການພັດທະນາຕະຫຼາດທຶນ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງມີປະສິດທິພາບ, ສຄຄຊ ໄດ້ສຳເລັດການຈັດກອງປະຊຸມເສວະນາ (Panel Discussion) ວຽກງານຫຼັກຊັບ ຫົວຂໍ້: Unlocking the Power of Collective Investment Scheme for National Economic Growth ແລກປ່ຽນບົດຮຽນກ່ຽວກັບການສ້າງຕັ້ງກອງທຶນ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 93 ເທື່ອຄົນ ແລະ ຈັດກອງປະຊຸມໂຕະມົນ ເພື່ອປຶກສາຫາລືໃນການເລີ່ມຕົ້ນສ້າງຜະລິດຕະພັນກອງທຶນ ແລະ ບໍລິສັດບໍລິຫານກອງທຶນ ໃນ ສປປ ລາວ ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 45 ເທື່ອຄົນ; ສຳເລັດການໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ທັງພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ຈຳນວນ 7 ຄັ້ງ, 7 ຫົວຂໍ້ ແລະ ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 1,015 ທ່ານ; ສຳເລັດການໂຄສະນາເຜີຍແຜ່ບັນດາລະບຽບການທີ່ສ້າງໃໝ່ ແລະ ປັບປຸງ  ໃຫ້ແກ່ 10 ບໍລິສັດຈົດທະບຽນ ຈຳນວນ 3 ຄັ້ງ, 4 ຫົວຂໍ້ ແລະ ມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 83 ເທື່ອຄົນ; ສຳລັບການໂຄສະນາເຜີຍແຜ່ຜ່ານທາງໂທລະພາບ ແລະ ສື່ອອນລາຍຕ່າງໆ ປະກອບມີ: ສຳເລັດການສ້າງພາບສະແດງຂໍ້ມູນ (Infrographic) ກ່ຽວກັບວຽກງານຫຼັກຊັບ ຈຳນວນ 15 ຫົວຂໍ້, ສ້າງກາຕູນ Animation ຈຳນວນ 2 ຫົວຂໍ້, ຖ່າຍທຳ Podcast ຈຳນວນ 5 ຫົວຂໍ້, ສາລະຕະຫຼາດທຶນ ຈຳນວນ 6 ຫົວຂໍ້, ເກັບກຳຂ່າວການເຄື່ອນໄຫວວຽກງານໃນຂົງເຂດຕະຫຼາດທຶນ ຈຳນວນ 28 ຄັ້ງ ເພື່ອເຜີຍແຜ່ຜ່ານລາຍການໂທລະພາບ "ເສັ້ນທາງສູ່ ຕະຫຼາດທຶນລາວ" ແລະ ສື່ອອນລາຍຂອງ ສຄຄຊ, ລາຍການໂທລະພາບ ຈຳນວນ 96 ເທັບ ແລະ ເຜີຍແຜ່ຜ່ານລາຍການເພື່ອນທະນາຄານ ຈຳນວນ 60 ຄັ້ງ ແລະ ສຳເລັດການ Boost Page ສຄຄຊ ເພື່ອເປັນການໂປຣໂໝດ Page ສຄຄຊ ໃຫ້ມີມວນຊົນທົ່ວໄປມາຕິດຕາມ ແລະ ຮູ້ຈັກວຽກງານຕະຫຼາດທຶນໃຫ້ຫຼາຍຂຶ້ນ ຈຳນວນ 7 ຄັ້ງ; ສຳລັບການໂຄສະນາເຜີຍແຜ່ຜ່ານທາງວິທະຍຸແມ່ນ ສຳເລັດການສ້າງ Spot ໂຄສະນາ ເພື່ອເຜີຍແຜ່ຜ່ານສະຖານີວິທະຍຸແຫ່ງຊາດລາວ ແລະ ຜ່ານວິທະຍຸ LaoYouth 90. 00MHz ຈຳນວນ 5 ຫົວຂໍ້; ສຳເລັດການສ້າງບົດຄົ້ນຄ້ວາແຜນພັດທະນາຄວາມຕ້ອງການທຸລະກິດ (BA) ແລະ ບົດຄົ້ນຄ້ວາແຜນພັດທະນາຄວາມຕ້ອງການດ້ານເຕັກນິກ (TA) ຂອງ ລະບົບຊື້ຂາຍຮຸ້ນຈຳລອງ (Mock Trading System); ກຳນົດເນື້ອໃນໃນການເຜີຍແຜ່ວຽກງານຕະຫຼາດທຶນ ໃນລາຍການວິທະຍຸຂອງເພື່ອນທະນາຄານ. ຄຽງຄູ່ກັນນັ້ນ, ໄດ້ສຳເລັດການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າແບບສາມຝ່າຍ ສສ.ຫວຽດນາມ, ລຸກຊຳບວກ ແລະ ສປປ ລາວ (Lao/032) ແລະ ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດໂຄງການ 3 ປີ ຊຶ່ງປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ທັງໝົດເກືອບ 95% ໃນປີ 2023.

ຮູບພາບ 5: ບັນຍາກາດການຈັດຝຶກອົບຮົມ




ຮູບພາບ 6: ບັນຍາກາດການລົງໂຄສະນາເຜີຍແຜ່ ວຽກງານຕະຫຼາດທຶນ



ຮູບພາບ 7: ຜະລິດສື່ໂຄສະນາຜ່ານລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ" ແລະ ສື່ອອນລາຍ



## 2.8 ການຮ່ວມມືສາກົນ

ສຄຄຊ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານພົວພັນຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນສະໜັບສະໜູນ ເພື່ອຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ, ແລກປ່ຽນຂໍ້ມູນຂ່າວສານ ແລະ ພັດທະນາວຽກງານຕະຫຼາດທຶນ.

ໃນຮູບແບບສອງຝ່າຍ, ສຄຄຊ ໄດ້ຮ່ວມມືກັບ ຄຄຊ ສປ.ຈີນ, ຫວຽດນາມ, ໄທ, ສະຖາບັນ IOD ໄທ, ສະຖາບັນ CPA Australia, ຕະຫຼາດຫຼັກຊັບໄທ ແລະ ລັດຖະບານລຸກຊໍາບວກ ຢ່າງເປັນປົກກະຕິ. ອັນພົ້ນເດັ່ນ ໄດ້ສໍາເລັດການເຊັນບົດບັນທຶກຄວາມເຂົ້າໃຈຮ່ວມມືສອງຝ່າຍ ຮ່ວມກັບ ຄຄຊ ກໍາປູເຈຍ, ສໍາເລັດການຂຶ້ນແຜນການຮ່ວມມື ແລະ ສະເໜີຂໍການຊ່ວຍເຫຼືອທາງດ້ານວິຊາການ ກັບ ຄຄຊ ສສ.ຫວຽດນາມ, ຄຄຊ ສປ.ຈີນ, ກລຕ ໄທ, ຄຄຊ ກໍາປູເຈຍ ແລະ ສະຖາບັນ CPA Australia ປະຈໍາປີ 2023; ສໍາເລັດການຈັດກອງປະຊຸມຮ່ວມມືສອງຝ່າຍປະຈໍາປີ ລະຫວ່າງ ສຄຄຊ ຮ່ວມກັບ ຄຄຊ ສສ.ຫວຽດນາມ ແລະ ຄຄຊ ກໍາປູເຈຍ, ສໍາເລັດການຈັດຕັ້ງປະຕິບັດໂຄງການຮ່ວມມື ລະຫວ່າງ ລັດຖະບານລາວ ແລະ ລັດຖະບານລຸກຊໍາບວກ (LAO/032). ພ້ອມນີ້, ພາຍໃຕ້ການຮ່ວມມືສອງຝ່າຍ ໄດ້ຈັດກອງປະຊຸມສໍາມະນາຮ່ວມກັບ ຄຄຊ ສສ.ຫວຽດນາມ, ກລຕ ໄທ, ຄຄຊ ກໍາປູເຈຍ, ສະຖາບັນ CPA Australia ແລະ ສະຖານທູດ ສ. ອາເມລິກາ ປະຈໍາ ສປປ ລາວ ຜ່ານທາງອອນລາຍ ແລະ ກັບທີ່ ຢູ່ນະຄອນຫຼວງວຽງຈັນ ຈໍານວນ 9 ຄັ້ງ, 12 ຫົວຂໍ້ ໂດຍຜູ້ເຂົ້າຮ່ວມທັງໝົດ 378 ເທື່ອຄົນ. ນອກນີ້, ໄດ້ສໍາເລັດການເຂົ້າຮ່ວມຝຶກອົບຮົມແລກປ່ຽນບົດຮຽນ ພາຍໃຕ້ໂຄງການລຸກຊໍາບວກ (LAO/032) ໃນຫົວຂໍ້: ການຊຸກຍູ້ສົ່ງເສີມ ບັນດາທຸລະກິດຂະໜາດນ້ອຍ ແລະ ກາງ ເຂົ້າກະດານຮອງຂອງຕະຫຼາດຫຼັກຊັບ ຢູ່ ສສ.ຫວຽດນາມ, ຫົວຂໍ້: ການຄຸ້ມຄອງກອງທຶນເພື່ອການລົງທຶນຮ່ວມທຸລະກິດ (Venture Capital:VC) ແລະ ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity:PE) ຢູ່ ປະເທດມາເລເຊຍ ແລະ 2 ຫົວຂໍ້ ຢູ່ ນະຄອນຫຼວງວຽງຈັນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 185 ເທື່ອຄົນ.

**ຮູບພາບ 8: ການເຂົ້າຮ່ວມຝຶກອົບຮົມແລກປ່ຽນບົດຮຽນ ຢູ່ ມາເລເຊຍ**



ຮູບພາບ 9: ກອງປະຊຸມສຳມະນາໃນຫົວຂໍ້: ຮຸ້ນກູ້ສີຂຽວ ລະຫວ່າງ ສຄຄຊ ແລະ ກລຕ ໄທ




ຮູບພາບ 10 : ການຈັດກອງປະຊຸມສຳມະນາ ໃນຫົວຂໍ້: ວຽກງານ **IFRS** ລະຫວ່າງ ສຄຄຊ ຮ່ວມກັບ **CPA Australia** ແລະ ບໍລິສັດ ເອີນ ແອນ ຢັງ (ລາວ) ຈຳກັດ



ໃນຮູບແບບຫຼາຍຝ່າຍ, ໄດ້ເອົາໃຈໃສ່ກະກຽມຄວາມພ້ອມໃນການເປັນປະທານກອງປະຊຸມ ACMF ໃນປີ 2024 ໂດຍໄດ້ສຳເລັດຝຶກງານຕົວຈິງໃນການກະກຽມຄວາມພ້ອມຮອບດ້ານ ເປັນປະທານກອງປະຊຸມການພັດທະນາຕະຫຼາດທຶນອາຊຽນ (ACMF) ຢູ່ປະເທດ ອິນໂດເນເຊຍ ແລະ ຈັດກອງປະຊຸມຮ່ວມກັບຄະນະຮັບຜິດຊອບກະກຽມເປັນປະທານກອງປະຊຸມ ACMF ຈຳນວນ 2 ຄັ້ງ; ສຳເລັດການຄົ້ນຄວ້າຂຶ້ນແຜນສ້າງຄວາມສາມາດ ເພື່ອສົ່ງເສີມການເຊື່ອມໂຍງທາງການເງິນຂອງອາຊຽນ (SCCB) ປະຈຳປີ 2024 ຂອງຄະນະ WC-CMD ພ້ອມທັງສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບວຽກງານຫຼັກຊັບໃນຂອບ ASEAN ແລະ ASEAN+3 ເປັນປົກກະຕິ (ກັບທີ່ ແລະ ອອນລາຍ) ຈຳນວນ 14 ຄັ້ງ ໂດຍມີຜູ້ເຂົ້າຮ່ວມ 58 ເທື່ອຄົນ.

**ຮູບພາບ 11: ການເຂົ້າຮ່ວມກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ASEAN Capital Markets Forum : ACMF Chair meeting) ຄັ້ງທີ 39 ຢູ່ປະເທດອິນໂດເນເຊຍ**




ສຳລັບການຮ່ວມມືກັບອົງການຈັດຕັ້ງສາກົນ ຄື: ທະນາຄານພັດທະນາອາຊີ, ທະນາຄານໂລກ ແລະ ອົງການການເງິນສາກົນ, ສຄຄຊ ໄດ້ສຳເລັດການຮັບຮອງແຜນການຊ່ວຍເຫຼືອດ້ານວິຊາການຈາກ ທະນາຄານພັດທະນາອາຊີ ແລະ ອົງການການເງິນສາກົນ ພ້ອມທັງ ສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບວຽກງານປິ່ນອ້ອມ ຈຳນວນ 2 ຄັ້ງ ໂດຍມີຜູ້ເຂົ້າຮ່ວມ 6 ເທື່ອຄົນ. ພ້ອມນີ້, ສຳລັບການກະກຽມຄວາມພ້ອມຮອບດ້ານໃນການສະໝັກເຂົ້າເປັນສະມາຊິກສົມບູນຂອງອົງການຄຸ້ມຄອງຫຼັກຊັບສາກົນ (IOSCO), ສຄຄຊ ໄດ້ສຳເລັດເບື້ອງຕົ້ນໃນການກະກຽມຊຸດເອກະສານປະເມີນຄວາມສອດຄ່ອງທາງດ້ານນິຕິກຳ ໂດຍໄດ້ປັບປຸງຕາມຄຳເຫັນຂອງຊ່ຽວຊານ IOSCO ແລະ ກອງເລຂາຂອງ IOSCO; ສຳເລັດການປຶກສາຫາລືທາງດ້ານວິຊາການ ຮ່ວມກັບຊ່ຽວຊານຂອງ ທະນາຄານໂລກ ເພື່ອທົບທວນຊຸດເອກະສານສະເໜີ

ເຂົ້າເປັນສະມາຊິກສົມບູນ IOSCO; ສຳເລັດການຄົ້ນຄວ້າສະເໜີຫາ ກະຊວງການຕ່າງປະເທດ ເພື່ອພິຈາລະນານຳເອົາຄ່າທຳນຽມການເປັນສະມາຊິກ IOSCO ເຂົ້າແຜນລາຍຈ່າຍລວມໃນວຽກງານຮ່ວມມືສາກົນ ຂອງ ສປປ ລາວ; ສຳເລັດການປະຊຸມປຶກສາຫາລື ຮ່ວມກັບ ຄະນະຮັບຜິດຊອບຄົ້ນຄວ້າ ແລະ ກະກຽມຄວາມພ້ອມຮອບດ້ານໃນການສະໝັກເຂົ້າເປັນສະມາຊິກຂອງ IOSCO. ພ້ອມນີ້, ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມ ປະຈຳປີ 2023 ຂອງ IOSCO ຢູ່ປະເທດໄທ ໂດຍມີຜູ້ເຂົ້າຮ່ວມ 2 ເທື່ອຄົນ ແລະ ສຳເລັດການເຂົ້າຮ່ວມສຳມະນາ IOSCO ຜ່ານລະບົບອອນລາຍ ຈຳນວນ 1 ຄັ້ງ ໂດຍມີຜູ້ເຂົ້າຮ່ວມ 9 ເທື່ອຄົນ.

**ຮູບພາບ 12: ການເຂົ້າຮ່ວມກອງປະຊຸມ ປະຈຳປີ 2023 ຂອງ IOSCO ຢູ່ປະເທດໄທ**



## III. ທິດທາງແຜນການ ປີ 2024

### 1. ຄາດຄະເນສະພາບຕະຫຼາດທຶນຂອງ ຕ່າງປະເທດ

ສະພາບຕະຫຼາດທຶນຂອງຕ່າງປະເທດ ຄາດວ່າຈະມີທັງກາລະໂອກາດ ແລະ ສິ່ງທ້າທາຍ ຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ ເປັນຕົ້ນ ສະພາບການເມືອງຂອງ ສ.ອາເມລິກາ, ພາວະເງິນເຟີ້ຂອງບັນດາປະເທດໃນທົ່ວໂລກ ແລະ ບັນຫາອື່ນໆ ຊຶ່ງຄາດວ່າຈະສົ່ງຜົນກະທົບ ຕໍ່ກັບເສດຖະກິດ ແລະ ບັນຍາກາດການລົງທຶນໃນຫຼັກຊັບ ຢູ່ໃນທົ່ວໂລກ ໂດຍສະເພາະ ຄວາມກັງວົນຂອງຜູ້ລົງທຶນ ຕໍ່ນະໂຍບາຍແກ້ໄຂ ແລະ ມາດຕະການກະຕຸ້ນເສດຖະກິດຂອງແຕ່ລະປະເທດ ເປັນຕົ້ນ ນະໂຍບາຍຂອງທະນາຄານກາງຂອງປະເທດມະຫາອຳນາດທາງດ້ານເສດຖະກິດ ທີ່ມີທ່າອ່ຽງປັບຫຼຸດອັດຕາດອກເບ້ຍ ກໍ່ ເປັນປັດໃຈໜຶ່ງ ສົ່ງຜົນກະທົບຕໍ່ກັບທິດທາງເສດຖະກິດໂລກ ແລະ ການຕັດສິນໃຈລົງທຶນ ໃນຫຼັກຊັບຂອງ ຜູ້ລົງທຶນໃນຕະຫຼາດທຶນ.

### 2. ຄາດຄະເນສະພາບຕະຫຼາດທຶນຂອງ ສປປ ລາວ

ໃນປີ 2024 ຄາດການວ່າສະພາບການເສດຖະກິດໂດຍລວມຂອງ ສປປ ລາວ ກໍ່ຄືຕະຫຼາດທຶນ ອາດຈະມີທ່າອ່ຽງທີ່ດີຂຶ້ນ ຖ້າຫາກວ່າມີການຟື້ນຕົວຈາກ ຄວາມຫຍຸ້ງຍາກທາງດ້ານການເງິນ, ອັດຕາເງິນເຟີ້ ທີ່ເລີ່ມມີທ່າອ່ຽງຫຼຸດລົງ ເຫັນໄດ້ຈາກນະໂຍບາຍການແກ້ໄຂທາງດ້ານການເງິນຂອງພາກລັດ ແລະ ຜົນການດຳເນີນງານຂອງບໍລິສັດຈົດທະບຽນ. ຂະແໜງການຕະຫຼາດທຶນ ກໍ່ໄດ້ສຸມໃສ່ ຄົ້ນຄວ້າຫາຊ່ອງທາງ ໃນການພັດທະນາຕະຫຼາດທຶນ ເພື່ອໃຫ້ມີທ່າກ້າວໃໝ່ໆ ເປັນຕົ້ນແມ່ນ ການຄົ້ນຄວ້າສ້າງກະດານຮອງ ເພື່ອເປັນບ່ອນຮອງຮັບໃຫ້ແກ່ການລະດົມທຶນຂອງບໍລິສັດຈົດທະບຽນຂະໜາດນ້ອຍ ແລະ ກາງ. ນອກຈາກນີ້ ກໍ່ມີການຄົ້ນຄວ້າວຽກງານການເງິນຍືນຍົງ ທີ່ເຫັນວ່າເປັນວຽກງານ ທີ່ມີບົດບາດ ແລະ ມີການພັດທະນາແບບມີລັກສະນະຕໍ່ເນື່ອງຫຼາຍ ໃນກຸ່ມປະເທດສະມາຊິກ ອາຊຽນ ນັບແຕ່ຊ່ວງວິກິດການ ໂຄວິດ-19 ເຊັ່ນ: ການກຳນົດຫຼັກການການອອກຈຳໜ່າຍພັນທະບັດສີຂຽວ ແລະ ອື່ນໆ, ໂດຍ ສປປ ລາວ ຫຼື ຂະແໜງການຕະຫຼາດທຶນລາວເອງ ກໍ່ມີການຄົ້ນຄວ້າວຽກງານການເງິນສີຂຽວ ເຊິ່ງແມ່ນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ເພື່ອຊຸກຍູ້ສົ່ງເສີມ ວຽກງານການເງິນຍືນຍົງໃນຕະຫຼາດ ທຶນລາວ ໂດຍໃນ 1-2 ປີຂ້າງໜ້າ ສຄຄຊ ຈະສົ່ງເສີມ ແລະ ຊຸກຍູ້ໃຫ້ເກີດຫົ່ແໜງ ຂອງການອອກຈຳໜ່າຍພັນທະບັດສີຂຽວໃນ ຕະຫຼາດຫຼັກຊັບ ຄຽງຄູ່ກັນກັບການພັດທະນາບຸກຄະລາກອນໃຫ້ມີຄວາມຮູ້ ແລະ ສາມາດປັບຕົວກັບທິດທາງ ຕະຫຼາດທຶນໃນອະນາຄົດທີ່ມີການພັດທະນາໄປທາງສີຂຽວ ແລະ ຍືນຍົງສູງຂຶ້ນ.

### 3. ໜ້າວຽກຕົ້ນຕໍທີ່ຕ້ອງໄດ້ສຸມໃສ່ໃນປີ 2024

#### 3.1 ນິຕິກຳທີ່ນຳໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ ແລະ ນະໂຍບາຍມະຫາພາກຕໍ່ວຽກງານຫຼັກຊັບ

ອີງໃສ່ສະພາບການຂະຫຍາຍຕົວຂອງວຽກງານຫຼັກຊັບ ທັງພາຍໃນປະເທດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ ໄດ້ຮຽກຮ້ອງໃຫ້ມີນິຕິກຳ ເພື່ອຄຸ້ມຄອງບັນດາພຶດຕິກຳ ຫຼື ການເຄື່ອນໄຫວວຽກງານຫຼັກຊັບທີ່ໄດ້ມີການພັດທະນາໃໝ່ ໃນແຕ່ລະໄລຍະ. ສຳລັບປີ 2024 ຄາດໝາຍ ແມ່ນໃຫ້ສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຢ່າງໜ້ອຍ 05 ສະບັບ ເພື່ອເປັນບ່ອນອີງໃນການຄຸ້ມຄອງເຄື່ອນໄຫວວຽກງານຫຼັກຊັບໃຫ້ມີຄວາມຄ່ອງຕົວຍິ່ງຂຶ້ນ ໂດຍສະເພາະແມ່ນ ການສ້າງ ແລະ ປັບປຸງນິຕິກຳເພື່ອຮອງຮັບໃຫ້ແກ່ວຽກງານການສ້າງກະດານຮອງ ໃນອານາຄົດ.

### 3.2 ການຄຸ້ມຄອງການອອກຈຳໜ່າຍຫຼັກຊັບໃນຕະຫຼາດຂັ້ນໜຶ່ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສືບຕໍ່ເອົາໃຈໃສ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້ານະໂຍບາຍອາກອນລາຍໄດ້ ເພື່ອຊຸກຍູ້ບໍລິສັດຈົດທະບຽນໃນກະດານຫຼັກ ແລະ ກະດານຮອງຂອງ ຕະຫຼາດຫຼັກຊັບ, ຄົ້ນຄວ້າເປົ້າໝາຍບໍລິສັດຈົດທະບຽນ ເພື່ອຂຶ້ນແຜນປັບປຸງຄວາມເຂັ້ມແຂງ ແລະ ຈັດລຽງບູລິມະສິດ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ ໃນແຕ່ລະໄລຍະ, ຄົ້ນຄວ້າຫັນລັດວິສາຫະກິດລະດົມທຶນຜ່ານກົນໄກຕະຫຼາດທຶນ, ຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ວິສາຫະກິດ ທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ແລະ ສືບຕໍ່ຕິດຕາມ, ວິເຄາະ, ຄົ້ນຄວ້າກ່ຽວກັບ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ການຈັດຕັ້ງປະຕິບັດມາດຕະຖານການລາຍງານທາງການເງິນ (IFRS) ພ້ອມທັງ ການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ CG Scorecard ຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບ ຂອງບໍລິສັດຈົດທະບຽນໃນແຕ່ລະໄລຍະ.

### 3.3 ການຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການເຄື່ອນໄຫວໃນຕະຫຼາດຂັ້ນສອງ

ສຄຄຊ ຈະສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບຢ່າງໃກ້ຊິດ ຜ່ານການຕິດຕາມສະພາບການ ເຄື່ອນໄຫວຊື້ ຂາຍຫຼັກຊັບ, ການກວດກາທາງເອກະສານ ແລະ ການກວດກາກັບທີ່, ພ້ອມທັງຊຸກຍູ້ໃຫ້ ຕະຫຼາດຫຼັກຊັບ ຕິດຕາມສະພາບການເໜັງຕີງຂອງລາຄາຫຼັກຊັບຂອງບັນດາບໍລິສັດຈົດທະບຽນ, ການຊື້ຂາຍຫຼັກຊັບ ທີ່ບໍ່ຍຸຕິທຳ, ການຝຶກອົບຮົມຍົກລະດັບຄວາມຮູ້ຂອງພະນັກງານ ແລະ ການປະຕິບັດຕາມພາລະບົບບາດຂອງຕົນ ຢ່າງມີປະສິດທິພາບ ເປັນຕົ້ນ ຊຸກຍູ້ໃຫ້ຕະຫຼາດຫຼັກຊັບ ຄົ້ນຄວ້າການເປັນອົງກອນ ການຄຸ້ມຄອງຕົນເອງ (Self Regilatory Organization: SRO), ຊຸກຍູ້ໃຫ້ເກີດການບໍລິການຊື້ ຂາຍຫຼັກຊັບຜ່ານມືຖື ຫຼື Mobile Trading System (MTS) ເພື່ອນຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ທີ່ເຄື່ອນໄຫວຊື້ຂາຍຫຼັກຊັບ ໃນຕະຫຼາດຂັ້ນສອງ, ຄົ້ນຄວ້າຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງຂອງຖານຜູ້ລົງທຶນຮ່ວມກັບຜູ້ມີສ່ວນຮ່ວມ ລວມທັງການບໍລິການ ອື່ນໆທີ່ ສາມາດອຳນວຍຄວາມສະດວກ ແລະສ້າງສະພາບຄ່ອງໃຫ້ເພີ່ມສູງຂຶ້ນ ໃນຕະຫຼາດຂັ້ນສອງ.

### 3.4 ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ

ສືບຕໍ່ຕິດຕາມອັດຕາສ່ວນຄວາມພຽງພໍຂອງທຶນ (NCR), ປະເມີນຄວາມສ່ຽງຂອງບໍລິສັດຫຼັກຊັບ ແບບຕີລາຄາຄວາມສ່ຽງ (Risk-Based Supervision) ແລະ ການປະຕິບັດໜ້າທີ່ຂອງບໍລິສັດຫຼັກຊັບຕິດພັນກັບການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT); ຊຸກຍູ້ບໍລິສັດຫຼັກຊັບ ໃນການເຊື່ອມຕໍ່ລະບົບການຊຳລະກັບຫຼາຍທະນາຄານ (Multiple Bank Link) ທີ່ໄດ້ສຳເລັດການພັດທະນາ, ຊຸກຍູ້ບໍລິສັດຫຼັກຊັບ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການພັດທະນາລະບົບການຊື້ຂາຍຫຼັກຊັບ ຜ່ານມືຖື (Mobile Trading App), ສຶກສາການສ້າງກົນໄກ ແລະ ລະບຽບການ ເພື່ອຮອງຮັບການບໍລິການກູ້ຢືມໂດຍໃຊ້ຫຼັກຊັບຄ້ຳປະກັນ (Securities Borrowing and Lending); ຄົ້ນຄວ້າການສ້າງຕັ້ງສະມາຄົມຕະຫຼາດທຶນລາວ, ສົມທົບກັບພາກສ່ວນກ່ຽວຂ້ອງຈັດຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຫຼັກສູດນັກປະເມີນມູນຄ່າຊັບສິນ, ຊຸກຍູ້ສະຖາບັນສື່ກາງ ພັດທະນາດ້ານການຄຸ້ມຄອງບໍລິຫານພາຍໃນໃຫ້ມີປະສິດທິພາບ ແລະ ເຂັ້ມແຂງ ເພື່ອຮັບປະກັນຄວາມສະຖຽນຂອງລະບົບການໃຫ້ບໍລິການຂອງຕົນ, ສ້າງລະບຽບ ແລະ

ຄູ່ມືປະຕິບັດງານພາຍໃນ ໃຫ້ຄົບຖ້ວນ ແລະ ສືບຕໍ່ຕິດຕາມ ແລະ ກວດກາການເຄື່ອນໄຫວທຸລະກິດ ຂອງສະຖາບັນສີ່ກາງດ້ານຫຼັກຊັບອື່ນຜ່ານທາງເອກະສານ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ບໍລິສັດຫຼັກຊັບ.

## 3.5 ການປົກປ້ອງຜູ້ລົງທຶນລາຍຍ່ອຍ

ສຄຄຊ ຈະສືບຕໍ່ໃນການຕິດຕາມ ແລະ ກວດກາ ໃນການຈັດຕັ້ງປະຕິບັດນິຕິກຳໃຫ້ເຂັ້ມງວດ ພ້ອມທັງສະກັດກັ້ນ ແລະ ແກ້ໄຂ ການລະເມີດລະບຽບກົດໝາຍ ໃຫ້ຫຼຸດລົງເທື່ອລະກ້າວ ດ້ວຍຮູບການສ້າງ ແລະ ປັບປຸງ ນິຕິກຳທີ່ກ່ຽວຂ້ອງ. ພ້ອມນີ້ ເພື່ອປະຕິບັດຕາມຄຳສັ່ງ ເລກທີ 02/ນຍ ສຄຄຊ ຈະສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳທີ່ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ ໃນຂົງເຂດວຽກງານຫຼັກຊັບ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປັບປຸງນິຕິກຳທີ່ກ່ຽວຂ້ອງກັບພາກສ່ວນອື່ນທີ່ຕິດພັນກັບວຽກງານດັ່ງກ່າວ ເປັນຕົ້ນແມ່ນ ປະສານສົມທົບກັບ ສານປະຊາຊົນສູງສຸດ ໃນການປັບປຸງກົດໝາຍວ່າການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍຄ່າທຳນຽມສານ ຕໍ່ກັບບາງເນື້ອໃນທີ່ ສຄຄຊ ໄດ້ສະເໜີໃຫ້ພາກສ່ວນດັ່ງກ່າວພິຈາລະນາ. ນອກນັ້ນ ຈະເພີ່ມທະວີໃນການໂຄສະນາເຜີຍແຜ່ ໃຫ້ມວນຊົນ ໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ລະບຽບກົດໝາຍດັ່ງກ່າວ ໃນຂົງເຂດວຽກງານຫຼັກຊັບ ແລະ ຂົງເຂດກ່ຽວຂ້ອງທີ່ປິ່ນອ້ອມກັບວຽກງານຫຼັກຊັບ. ພ້ອມທັງ, ເອົາໃຈໃສ່ຕິດຕາມ ຜ່ານຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຂຶ້ນກວ່າເກົ່າ.

## 3.6 ການໂຄສະນາເຜີຍແຜ່ ແລະ ໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນຂອງ ສປປ ລາວ ນັບມື້ນັບຫຼາຍຂຶ້ນ, ສຄຄຊ ຈະສົມທົບກັບ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ຄົ້ນຄວ້າສ້າງຫຼັກສູດຝຶກອົບຮົມວຽກງານຫຼັກຊັບ ແລະ ຫຼັກສູດສຳລັບນັກວິຊາຊີບທຸລະກິດຫຼັກຊັບ ພ້ອມທັງ ຈັດຝຶກອົບຮົມໃຫ້ນັກວິຊາຊີບທຸລະກິດຫຼັກຊັບ (Refreshment) ຢ່າງໜ້ອຍ 1 ຄັ້ງ/ປີ. ພ້ອມດຽວກັນນີ້, ຈະສືບຕໍ່ປັບປຸງເນື້ອໃນ ແລະ ຮູບແບບໂຄສະນາເຜີຍແຜ່ ເພື່ອໃຫ້ແທດເໝາະກັບແຕ່ລະກຸ່ມເປົ້າໝາຍຜ່ານຊ່ອງທາງໂຄສະນາຕ່າງໆ ເພື່ອໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ແລະ ທົ່ວເຖິງຫຼາຍຂຶ້ນ ໂດຍສະເພາະ ເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ), ລະບຽບການທີ່ກ່ຽວຂ້ອງ ແລະ ໂຄສະນາເຜີຍແຜ່ກັບທົ່ວຽກງານຕະຫຼາດທຶນໃນຫົວຂໍ້ຕ່າງໆຢ່າງມີຈຸດສຸມ ໃຫ້ແກ່ພາກສ່ວນຕ່າງໆໃນສັງຄົມຕາມຄວາມເໝາະສົມ; ຄຽງຄູ່ກັນນັ້ນ ເພື່ອສ້າງເງື່ອນໄຂ ໃຫ້ກັບສັງຄົມທຸກພາກສ່ວນໃນ ສປປ ລາວ ໃຫ້ສາມາດເຂົ້າເຖິງຂໍ້ມູນຄວາມຮູ້ວຽກງານຕະຫຼາດທຶນໄດ້ຢ່າງສະດວກຍິ່ງຂຶ້ນ ສຄຄຊ ຈະຫັນການໂຄສະນາເຜີຍແຜ່ ຜ່ານຊ່ອງທາງສື່ອອນລາຍໃຫ້ຫຼາຍຂຶ້ນ ເປັນຕົ້ນແມ່ນ ຜ່ານທາງ Facebook, Youtube, Tiktok ໃນຮູບແບບຕ່າງໆເຊັ່ນ: ພາບສະແດງຂໍ້ມູນ (Infographic), ກາຕູນສັ້ນ (Animation), ການນຳສະເໜີໃນຮູບແບບວິດີໂອ (Podcast) ແລະ ອື່ນໆ. ນອກນີ້, ກໍ່ຈະສືບຕໍ່ສຶກສາ ແລະ ຄົ້ນຄວ້າກ່ຽວກັບການສ້າງຕັ້ງສູນໃຫ້ຄວາມຮູ້ວຽກງານຕະຫຼາດທຶນ; ສືບຕໍ່ຍາດແຍ່ງໂຄງການຮ່ວມມືຊ່ວຍເຫຼືອສາມຝ່າຍຈາກລຸກຊຳບວກ (ໂຄງການ Lao/032) ໃນການພັດທະນາວຽກງານການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ພ້ອມທັງ ສືບຕໍ່ຄຸ້ມຄອງຫ້ອງສະໝຸດ ສຄຄຊ ຢ່າງເປັນປົກກະຕິ ແລະ ສຶກສາຄວາມເປັນໄປໄດ້ໃນການຫັນເປັນຫ້ອງສະໝຸດອອນລາຍ.

## 3.7 ການຮ່ວມມືສາກົນ

ສຄຄຊ ຈະສືບຕໍ່ເພີ່ມທະວີການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ທັງພາກພື້ນ ແລະ ສາກົນ ໃຫ້ເຂົ້າສູ່ລວງກວ້າງ ແລະ ລວງເລິກ ເພື່ອພັດທະນາວຽກງານຕະຫຼາດທຶນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ກ້າວສູ່ມາດຖານສາກົນເທື່ອລະກ້າວ ໂດຍຜ່ານການຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍ ເປັນຕົ້ນແມ່ນ: ຄຄຊ ສປ.ຈີນ, ຄຄຊ ສສ.

ຫວຽດນາມ, ກລຕ ໄທ, ຄຄຊ ກຳປູເຈຍ, ຄຄຊ ສ.ເກົາຫຼີ, ຍີ່ປຸ່ນ, CPA Australia, IOD ໄທ, ຕະຫຼາດຫຼັກຊັບໄທ, ລັດຖະບານລຸກຊຳບວກ ລວມທັງ ກະກຽມເປັນເຈົ້າພາບຈັດກອງປະຊຸມຮ່ວມມືສອງຝ່າຍຄັ້ງທີ 12 ປະຈຳປີ 2023 ຮ່ວມກັບ ຄຄຊ ສສ.ຫວຽດ ນາມ, ຄົ້ນຄວ້າກະກຽມສະເໜີເຊັນ MOU ຮ່ວມກັບ ຄຄຊ ກຳປູເຈຍ ແລະ ອື່ນໆ; ສືບຕໍ່ສ້າງສາຍພົວພັນຮ່ວມຫຼາຍຝ່າຍ ເປັນຕົ້ນແມ່ນ: ການຮ່ວມມືໃນການພັດທະນາຕະຫຼາດທຶນໃນຂອບ 5 ປະເທດເຂດແມ່ນ້ຳຂອງ ແລະ ການຮ່ວມມືໃນຂອບອາຊຽນ ແລະ ກະກຽມຄວາມພ້ອມໃນການເປັນຮອງປະທານ ACMF ໃນປີ 2023 ແລະ ປະທານ ACMF ໃນປີ 2024; ສືບຕໍ່ຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ເປັນຕົ້ນ: ທະນາຄານພັດທະນາອາຊີ (ADB), ອົງການການເງິນສາກົນ (IFC), ທະນາຄານໂລກ (WB) ເພື່ອພັດທະນາວຽກງານການບັນຊີ ແລະ ຕະຫຼາດຮຸ້ນກູ້ຂອງ ສປປ ລາວ ພ້ອມທັງ ໃຫ້ສຳເລັດການກະກຽມເພື່ອເຂົ້າຮ່ວມການປະເມີນຄວາມສອດຄ່ອງດ້ານນິຕິກຳ ເບື້ອງຕົ້ນຮ່ວມກັບຄະນະທົບທວນ (Screening Group ຂອງ IOSCO) ພ້ອມທັງ ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆທີ່ຕິດພັນ.

# ຂໍ້ມູນຕິດຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)



ທີ່ຕັ້ງສຳນັກງານ: ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

PO. Box: 19

Phone: (856-21) 217 770

Fax: (856-21) 217 806

E-mail: lsco@lsc.gov.la

Website: www.lsc.gov.la

ໂທລະສັບສາຍດ່ວນ: 1602

Facebook: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

Youtube: ລາຍການ “ເສັ້ນທາງສູ່ຕະຫຼາດທຶນລາວ”.